<u>ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ</u>

**Copyright © 2006 by BAPTISTWAY PRESS®.**
**ສງວນລິກຂະສິດ**

ອະນຸຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ.  ຫ້າມ ຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ.  ຖ້າຢາກຊາບ ລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ:  ເດືອນ ມີນາ, ໒004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, Missions, Evangelism, and Ministry Team: Wayne Shuffield
Director, Bible Study/Discipleship Center: Dennis Parrott

Publishing consultant: Ross West, Positive Difference Communications

Language Materials Team

Teaching Procedures Writer for Lesson 1- 4
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lesson 1- 4
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 5-7
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lesson 5-7
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 8- 11
Sidney Kahn, Saginaw Community Church, Fort Worth, Texas
Editor for Lesson 8-11
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 12-13 & Christmas Lesson
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lesson 12-13 & Christmas Lesson
Phaisane Somsith, Grace Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

## ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 1
## ຈາກຄວາມເປັນອັມະຕະມາເຖິງນີ້

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢຮັນ 1:1-18, 29-36, 43-45

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ໂຢຮັນ ບົດທີ 1

**ຈຸດສຳຄັນຂອງບົດຮຽນນີ້:** ພວກເຮົາຖືກເອີ້ນໃຫ້ມາຕິດຕາມພຣະເຢຊູ ຜູ້ເປັນຄວາມສວ່າງແຫ່ງຄວາມຈິງຂອງຄວາມເປັນອັມະຕະຂອງພຣະເຈົ້າ

**ຄຳຖາມເພື່ອສຳຣວດ:** ເປັນຫຍັງຈຶ່ງຕິດຕາມພຣະເຢຊູ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະອະທິບາຍເຖິງພຣະເຈົ້າຜູ້ເປັນອັມະຕະ ໄດ້ສະເດັດມາເປັນຕົວຕົນໃນຮູບຮ່າງຂອງພຣະເຢຊູ ເພື່ອຈະມີຜົນປາກົດໃນຊີວິດຂອງພວກເຮົາທຸກວັນນີ້

### ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ບໍ່ວ່າບ່ອນໃດ, ສະຖານທີ່ໃດ ຈະມີຄຳສອນ ບອກເຖິງການຕິດຕາມຜູ້ນຳ. ຖ້າຈະເວົ້າເຣື່ອງຕິດຕາມນີ້ ເຮົາກໍຈຳເປັນຕ້ອງໄດ້ຣະມັດຣະວັງວ່າຈະຕິດຕາມຜູ້ນຳຢ່າງໃດ. ຜູ້ນຳທີ່ມັກຫາເຣື່ອງ, ຜູ້ນຳທີ່ອວດຕົວ, ຜູ້ນຳທີ່ອວງໂຕສູງ, ຜູ້ນຳທີ່ສັດຊື່, ຜູ້ນຳທີ່ມັກຊ່ວຍເຫລືອ..............
   ທ່ານມັກຕິດຕາມຜູ້ນຳຢ່າງໃດ? ໃຫ້ໂອກາດຄິດແລະສົນທະນາຈັກ5 ນາທີ
   ຄຣູຈະແນະນຳຊີ້ໄປຫາພຣະເຢຊູຜູ້ທີ່ເປັນຜູ້ນຳທີ່ມີຄຸນຄ່າ ມີຣາຄາ ສົມຄວນທີ່ຈະຕິດຕາມໄປຈົນຕລອດຊີວິດ.

### ນຳພາສຶກສາພຣະຄັມພີ

2. ກ່ອນຈະອ່ານພຣະທັມໃນວັນນີ້ຄຣູຈະຖາມວ່າ ມີຜູ້ໃດທີ່ເຄີຍຮູ້ເຣື່ອງກ່ຽວກັບພຣະກິດຕິຄຸນໂຢຮັນມາແລ້ວ? ມີຕອນໃດທີ່ມັກຫລາຍກວ່າຫມູ່ແລະສອນໄດ້ດີຫລາຍກວ່າຫມູ່? ຄຣູຈະຊ່ວຍໃຫ້ຂໍ້ອ້າງເພື່ອນຳໄປຫາພຣະທັມ "ພຣະທັມຊົງບັງເກີດເປັນມະນຸດ" ມີຄວາມຫມາຍຄືຢ່າງໃດ? ໃຫ້ໂອກາດນັກຮຽນໃຫ້ຄຳຄິດຄຳເຫັນ

3. ຂຽນຫົວຂໍ້ບົດສອນໃສ່ກະດານ: (ໃນເຈັ້ຍບົດຮຽນ)
   ພຣະທັມ, ຊີວິດ ແລະຄວາມສວ່າງ (1:1-9)
   ຂອງປະທານທີ່ໂລກພາກັນປະຕິເສດ (1:10-11)
   ຈົ່ງພາກັນຕ້ອນຮັບພຣະອົງ (1:12-18)
   ພະຍານ (1:29-36)
   ຕາມເສັ້ນທາງ (1:43-45)

4. ແນະນຳໃຫ້ນັກຮຽນພາກັນສັງເກດ ໃນຂະນະທີ່ອ່ານພຣະຄັມພີໄປນີ້ (ອ່ານ ໂຢຮັນ 1:1-9)

ຖາມ: ມີຄຳໃດແດ່ທີ່ອະທິບາຍເຖິງພຣະເຢຊູ? ພຣະທັມ, ຊີວິດ, ຄວາມສວ່າງ.
ພຣະເຢຊູສາມາດເປັນຜູ້ນຳໄດ້ບໍ່? ພຣະອົງຊົງມີຄຸນຄ່າຫລາຍທີ່ສຸດສຳລັບມວນມະນຸສໂລກ

5. ອ່ານ ໂຢຮັນ 1:10-11. ແລ້ວຖາມໃນຂໍ້ທີ່ອ່ານຜ່ານມານີ້ ພຣະເຢຊູເຮັດຫຍັງແດ່? ພຣະອົງຊົງສ້າງໂລກ
ພຣະອົງສະເດັດມາຫາພວກເຮົາ, ມາໃນໂລກຂອງພຣະອົງ.
ແຕ່ກ່ອນພຣະເຢຊູຊົງຢູ່ໃສ? ລໍຄຳຕອບ; ເປັນຫຍັງໂຢຮັນຈຶ່ງກ່າວວ່າຊາວບ້ານຊາວເມືອງຂອງພຣະອົງ?

6. ຂໍ້ 12-18 ເມື່ອອ່ານແລ້ວ ຈະຖາມວ່າ: ຂໍ້ພຣະທັມຕອນນີ້ ກຳລັງບອກພວກເຮົາວ່າຢ່າງໃດ? ແລະພຣະອົງ
ຈະກະທຳຢ່າງໃດ? ໂຢຮັນບໍ່ໄດ້ຊີ້ນິ້ວມືໃສ່ຕົວເອງແຕ່ລາວໄດ້ຊີ້ນິ້ວມືໃສ່ອົງພຣະເຢຊູ ແລະຂໍໃຫ້ຕ້ອນຮັບເອົາ
ພຣະເຢຊູ ຄຳອະທິບາຍຈະມີຢູ່ໃນເຈັ້ຍບົດຮຽນ.

7. ຂໍ້ 29-36 ໂຢຮັນເປັນພະຍານກ່ຽວກັບພຣະເຢຊູ ວ່າລາວໄດ້ໃຫ້ພຣະອົງຮັບບັບຕິສະມາ ແລະລາວກໍໄດ້ເຫັນສິ່ງ
ທີ່ພຣະເຈົ້າຊົງສຳແດງໃຫ້ແກ່ລາວ. ແລະໂຢຮັນກໍໄດ້ຢືນຢັນຢ່າງເດັດຂາດວ່າ ແມ່ນທ່ານຜູ້ນີ້ລະເປັນບຸດຂອງ
ພຣະເຈົ້າ.

8. ໃຫ້ຄົນນຶ່ງອ່ານ 1:40-45 ເມື່ອຈົບແລ້ວ ເຮົາອາດຖາມວ່າ: ພຣະເຢຊູເປັນຜູ້ນຳຢ່າງໃດ? ທ່ານເປັນຜູ້ຕິດຕາມ
ພຣະເຢຊູແລ້ວຫລື? ຖ້າຍັງເປັນຫຍັງ?

## <u>ນຳໃຊ້ໃນຊີວິດປະຈຳວັນ</u>

9. ຖາມຄຳຖາມເຫລົ່ານີ້ ວ່າຄຸນລັກສນະຂອງພຣະເຢຊູເປັນຢ່າງໃດ?
   - ຂໍ້ຄວາມທີ່ຮຽນຜ່ານມານີ້ບອກພວກເຮົາວ່າພຣະເຢຊູແມ່ນຜູ້ໃດ?
   - ຂໍ້ຄວາມເຫລົ່ານີ້ແນະນຳພວກເຮົາໄປຫາຜູ້ໃດ?
   - ພວກເຮົາຈະຕອບຄົນອື່ນຢ່າງໃດ ຖ້າມີຄົນຖາມເຮົາວ່າເປັນຫຍັງເຈົ້າຈຶ່ງຕິດຕາມພຣະເຢຊູ?
   - ມີພົນທາງໃດອີກແດ່ບໍ່ທີ່ພວກເຮົາໄດ້ຮັບຈາກພຣະເຢຊູໃນວັນນີ້?

*ດຣ. ບຸນໂຮມ ພົມມະຈັນ*

# <u>ຄຳແນະນຳສຳລັບຄຣູສອນ</u>

# <u>ບົດຮຽນທີ 2</u>

# <u>ຊອກສແວງຫາຊີວິດທີ່ແທ້ຈິງ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ໂຢຮັນ 3:1-16

**<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u>** ໂຢຮັນ ບົດ 3

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ຊີວິດທີ່ແທ້ຈິງຄື ຊີວິດທີ່ເກີດມາຈາກເບື້ອງເທິງ, ໂດຍທາງຄວາມເຊື່ອໃນອົງພຣະເຢຊູຄຣິດ, ພຣະບຸດຂອງພຣະເຈົ້າ.

**<u>ຄຳຖາມເພື່ອສຳຣວດ:</u>** ເຮົາຈະສາມາດຮັບເອົາຊີວິດທີ່ແທ້ຈິງໄດ້ຢ່າງໃດ?

**<u>ຈຸດປະສົງຂອງບົດຮຽນ:</u>** ເພື່ອຈະອະທິບາຍວ່າເຮົາຈຳເປັນຕ້ອງເກີດຈາກເບື້ອງເທິງ, ແລະຈະເກີດຈາກເບື້ອງເທິງຢ່າງໃດ?

## <u>ແຜນການສິດສອນ</u>

## <u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u>

1. ສເລີມສລອງວັນເກີດ ແມ່ນສິ່ງນຶ່ງທີ່ໄດ້ຮັບຄວາມມ່ວນຊື່ນຍິນດີ ໂດຍສເພາະແມ່ນເດັກນ້ອຍ. ໂດຍຕົວຈິງແລ້ວ ມື້ນີ້ແມ່ນວັນເກີດຂອງໃຜ? ຫລືວ່າເດືອນນີ້ມີໃຜແດ່? ໃຫ້ນັກຮຽນບອກລອງເບິ່ງດູວ່າຄັ້ງລ້າສຸດທີ່ທ່ານໄປສລອງວັນເກີດຜູ້ໃດ? ເວົ້າສູ່ຟັງແດ່ວ່າໄດ້ເຫັນຫຍັງແດ່? ໄດ້ເຮັດຫຍັງແດ່? ເຂົາເຈົ້າສລອງຢ່າງໃດ?

2. ບອກໃຫ້ນັກຮຽນຮູ້ວ່າ ພຣະຄັມພີກ່າວວ່າຖ້າມີຜູ້ໃດເກີດມາໃຫມ່ ແລະມາຫາພຣະເຢຊູດ້ວຍຄວາມລອດພົ້ນຈະເກີດມີຄວາມຍິນດີໃນສວັນ. (ລູກາ 15:7) ເວລາພວກເຮົາສເລີມສລອງວັນເກີດ ບໍ່ວ່າຈະເປັນຄົນໃນຄອບຄົວ,ຫມູ່ເພື່ອນ, ພຣະເຈົ້າໃນສວັນກໍຊື່ນຊົມຍິນດີນຳດ້ວຍ

## <u>ນຳພາການສຶກສາພຣະຄັມພີ</u>

3. ໃຫ້ຜູ້ສມັກໃຈອ່ານ ໂຢຮັນ 3:1-2. ຄົນຟາຣີຊາຍຄົນນຶ່ງຊື່ນີໂກເດມ ໄດ້ມອບກາຍຖວາຍຕົວໃຫ້ກັບກົດຫມາຍຂອງຍິວ, ເປັນສະມາຊິກຂອງສະພາແຊນຮີດຣິນ, ແລະລາວຍັງເປັນຜູ້ນຳສາສນາອີກ.
   ວາງຄຳຖາມເຫລົ່ານີ້ເພື່ອຈະສົນທະນາ:
   - ເປັນຫຍັງນີໂກເດມຈຶ່ງມາຫາພຣະເຢຊູ? ປ່ອຍໂອກາດໃຫ້ນັກຮຽນຕອບຄຳຖາມ
   - ເປັນຫຍັງນີໂກເດມຈຶ່ງມາຕອນກາງຄືນ? ປ່ອຍໂອກາດໃຫ້ນັກຮຽນຕອບຄຳຖາມ
   - ເມື່ອອ່ານໃນຂໍ້ທີສອງແລ້ວ ທ່ານຄິດວ່າແມ່ນຫຍັງທີ່ນຳພານີໂກເດມມາຫາພຣະເຢຊູ? ຄຳເວົ້າຂອງນີໂກເດມ ມີສ່ວນກ່ຽວຂ້ອງກັບຈິດວິນຍານບໍ່? ກ່ຽວຂ້ອງຢ່າງໃດ?
   - ນີໂກເດມເຫັນຄວາມຫມາຍຂອງຊີວິດທີ່ແທ້ຈິງຢ່າງໃດ ເມື່ອລາວໄດ້ພົບພຣະເຢຊູແລ້ວ?

4. ໃຫ້ອີກຄົນນຶ່ງອ່ານ ໂຢຮັນ 3:3-8. ພຣະເຢຊູຮູ້ເຫັນດີວ່າ ນີໂກເດມກຳລັງຊອກສແວງຫາອັນໃດ. ພຣະອົງກໍໄດ້

ໃຫ້ຄຳແນະນຳໃໝ່ກ່ຽວກັບຊີວິດອັນແທ້ຈິງ. ເພາະຊີວິດບໍ່ແມ່ນແຕ່ຈະປະຕິບັດພະບັນຍັດເທົ່ານັ້ນ ແທນທີ່ຈະມີຄວາມສັມພັນກັບພຣະເຈົ້າ. ນີໂກເດມຕ້ອງມີການປ່ຽນແປງ ແຕ່ການປ່ຽນແປງນັ້ນບໍ່ແມ່ນຂອງງ່າຍສຳລັບລາວ, ແລະສຳລັບພວກເຮົາກໍເໝືອນກັນ. ຖາມຄຳຖາມ 1 ຫາ 4 ໃນເຈັ້ຽບົດຮຽນ ແລ້ວກໍສົນທະນາກັບນັກຮຽນ.

5. ເຊີນໃຫ້ນັກຮຽນອ່ານ ໂຢຮັນ 3:9-16. ຈົ່ງຈຳເອົາໄວ້ວ່າພຣະເຢຊູພະຍາຍາມທີ່ຈະນຳພານີໂກເດມໃຫ້ເຫັນຊີວິດທີ່ແທ້ຈິງ. ແຕ່ນີໂກເດມຍັງບໍ່ເຂົ້າໃຈວ່າພຣະອົງສອນເຖິງອັນໃດ. ໃນຄືນວັນນັ້ນລາວໄດ້ຈາກພຣະເຢຊູໄປດ້ວຍຄວາມບໍ່ຈະແຈ້ງແລະລາວກໍຍັງບໍ່ເຂົ້າໃຈທັງໝົດທີ່ພຣະເຢຊູໄດ້ກ່າວຕໍ່ລາວ. ຂໍ້ ທີ 16 ເປັນຂໍ້ທີ່ຈະແຈ້ງ, ງ່າຍໃນການເຂົ້າໃຈ, ແລະກໍແນະນຳໄປເຖິງຈຸດດີ.

## <u>ແນະນຳແລະໜູນໃຈໃນການປະຕິບັດ</u>

6. ໜູນໃຈໃຫ້ນັກຮຽນພາກັນທ່ອງຂຶ້ນໃຈພຣະທັມຂໍ້ນີ້. ໂຢຮັນ 3:16 ແລະມີຄວາມໝາຍຫຍັງສຳຫລັບຕົວເຮົາເອງ.

7. ສົມມຸດວ່າທ່ານມີເພື່ອນທີ່ບໍ່ເປັນຄຣິສຕຽນ ຖາມທ່ານວ່າທ່ານມີຄວາມສັມພັນກັບພຣະເຈົ້າຢ່າງໃດ? ຊີວິດທີ່ແທ້ຈິງຄືຊີວິດຢ່າງໃດ? ທ່ານຈະຕອບພວກເຂົາຢ່າງໃດ? ທ່ານເຂົ້າໃຈໄດ້ດີແລ້ວບໍ່ກ່ຽວກັບການບັງເກີດໃໝ່ຝ່າຍຈິດວິນຍານ?

## <u>ທ່ານໄດ້ເກີດໃໝ່ແລ້ວບໍ່?</u>

8. ໃນວັນນີ້ເວລານະມັສການພຣະເຈົ້າ ຖ້າພຣະເຢຊູຫາກເຊື້ອເຊີນທ່ານໃຫ້ເກີດໃໝ່ແລະເຂົ້າຮ່ວມພຣະຣາຊກິດຂອງພຣະອົງທ່ານຈະວ່າຢ່າງໃດ?

9. ອະທິຖານເພື່ອຜູ້ທີ່ຍັງບໍ່ທັນເກີດໃໝ່ ແລະຕຽມຕົວເຂົ້າສູ່ການນະມັສການພຣະເຈົ້າ.

*ດຣ. ບຸນໂຮມ ພົມມະຈັນ*

## ຄຳແນະນຳສຳລັບຄຣູສອນ

## ບົດຮຽນທີ 3

## ພົບກັບພຣະຜູ້ຊ່ວຍຂອງໂລກ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢຮັນ 4:1-30, 39-42

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ໂຢຮັນ 4:1-42

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຢຊູຄຣິດໄດ້ຍອມຖວາຍຕົນເອງແລະເສັ້ນທາງຂອງພຣະອົງເພື່ອທຸກຄົນທີ່ຕ້ອນຮັບເອົາພຣະອົງ, ແມ່ນວ່າຊີວິດຜ່ານມາຂອງເຂົາຈະເປັນຢ່າງໃດກໍຕາມ.

**ຄຳຖາມເພື່ອສຳຣວດ:** ຖ້າທ່ານສາມາດເວົ້າໂດຍກົງກັບພຣະເຢຊູໄດ້? ທ່ານຈະອະທິບາຍເຣື່ອງຊີວິດຂອງທ່ານແລະການພົບພຣະເຢຊູຢ່າງໃດໃຫ້ຜູ້ອື່ນເຫັນ?

**ຈຸດປະສົງຂອງບົດຮຽນ:** ເພື່ອຕິດຕາມຄວາມໝາຍໃນການສົນທະນາລະຫວ່າງພຣະເຢຊູແລະຍິງຊາວຊະມາເຣັຽແລະນຳມາໃຊ້ຕໍ່ບຸກຄົນທີ່ມີຄວາມສັມພັນກັບພຣະເຢຊູ.

### ແຜນການສິດສອນ

### ນຳເຂົ້າສູ່ຊີວິດຈິງ

1. ເປີດພຣະທັມຄັມພີ ກິຈການ 1:8 *"ແຕ່ທ່ານທັງຫລາຍຈະໄດ້ຮັບພຣະຣາຊທານຣິດເດດ ເມື່ອພຣະວິນຍານບໍຣິສຸດຈະສະເດັດມາເຖິງທ່ານ ແລະພວກທ່ານຈະເປັນພະຍານຝ່າຍເຮົາໃນກຸງເຢຣູຊາເລັມ, ຕລອດທົ່ວແຂວງຢູດາຍ, ກັບແຂວງຊະມາເຣັຽ, ແລະຈົນເຖິງທີ່ສຸດປາຍແຜ່ນດິນໂລກ."*

   ຖາມນັກຮຽນວ່າ ພຣະເຢຊູໃຫ້ໄປປ່າວປະກາດຢູ່ໃສແດ່? ຈົ່ງແບ່ງປັນ ແລະສົນທະນາກ່ຽວກັບສະຖານທີ່ ທີ່ພຣະອົງມອບໝາຍໃຫ້.

   ພຣະເຢຊູກ່າວປໂຍກນີ້ກ່ອນທີ່ພຣະອົງຈະສະເດັດຂຶ້ນສູ່ສວັນ. ໃນເວລານັ້ນສາວົກຂອງພຣະອົງໄດ້ມາອ້ອມລ້ອມພຣະອົງໃກ້ໆ ກັບກຸງເຢຣູຊາເລັມ. ພຣະອົງຊົງບອກພວກສາວົກຂອງພຣະອົງວ່າ ຈົ່ງບອກໃຫ້ທຸກຄົນຮູ້ວ່າພຣະເຢຊູຖືກຄຶງໃຫ້ຕາຍທີ່ກາງແຂນ ແລ້ວພຣະອົງຊົງຄືນມາແລ້ວພຣະອົງກໍຍັງມີຊີວິດຢູ່ດຽວນີ້ ປັດຈຸບັນນີ້.

   ຢູເດັຽເປັນດິນແດນ ຊຶ່ງກວ້າງອອກໄປແດ່ ຊຶ່ງຂ້າງໆ ເຢຣູຊາເລັມ. ທຸກຄົນໃນຂົງເຂດນັ້ນ ກໍລໍຖ້າພຣະເມຊີອາແລະຢາກເຫັນພຣະອົງສະເດັດມາ.

   ຊາມາເຣັຽ ເປັນເຂດທີ່ຢູ່ເໜືອຢູເດັຽຂຶ້ນໄປ. ເມື່ອປະເທດອັດຊີເຣັຽຊະນະສົງຄາມ ພວກເຂົາກໍກວາດຕ້ອນເອົາຄົນຕ່າງຊາດໄປຊາດໄວ້ທີ່ນັ້ນ. ຄົນຍິວຫລາຍຄົນກໍໄດ້ແຕ່ງງານກັບຄົນອັດຊີເຣັຽ. ແຕ່ຄົນຍິວທີ່ຢູ່ໃນກຸງເຢຣູຊາເລັມ ປະຕິເສດຄົນຍິວແລະຄົນຊະມາເຣັຽພວກນີ້ ເພາະເຂົາເປັນຄົນປະສົມ. ສມັຍພຣະເຢຊູ ຊາມາເຣັຽເປັນທີ່ກຽດຊັງຂອງພວກຍິວຫລາຍທີ່ສຸດ.

ພຣະເຢຊູໄດ້ສັ່ງສາວົກຂອງພຣະອົງ ໃຫ້ອອກໄປປ່າວປະກາດແກ່ທຸກຄົນ: ຄົນຢິວ, ຄົນຕ່າງຊາດ, ເພື່ອນຝູງ, ສັດຕຣູ, ແລະທຸກຊົນຊາດ.

2. ວັນນີ້ ພຣະເຢຊູນຳພາສາວົກຂອງພຣະອົງເຂົ້າສູ່ແຂວງຊະມາເຣັຽ. ພຣະອົງວາງແບບຢ່າງໃຫ້ຄຣິສຕຽນການປະກາດບໍ່ມີຂອບເຂດ ບໍ່ມີຣີດຄອງປະເພນີກີດກັ້ນ. ຈົ່ງປະກາດດ້ວຍຄວາມຮັກ.

## <u>ສຶກສາພຣະຄັມພີ</u>

3. ສຳລັບຂໍ້ນີ້ໃຫ້ເບິ່ງເຈັ້ຍບົດຮຽນ 4:1-4 ໃຫ້ນັກຮຽນສຳຣວດຕົວເອງວ່າ ພວກເຂົາຢູ່ໃນຖານະໃດ ສາວົກ, ຫລືພຣະເຢຊູ, ຫລືຍິງຊາວຊະມາເຣັຽ, ຍ້ອນເຫດຜົນຫຍັງຈຶ່ງຕ້ອງຜ່ານຊະມາເຣັຽ?

4. ອ່ານ 4:5-9 ສັງເກດເບິ່ງຍິງຊາວຊະມາເຣັຽແລະນີໂກເດມທີ່ພົບໃນ ໂຢຮັນ 3:1-4 ບົດຮຽນຜ່ານມາ. ມີຄວາມແຕກຕ່າງຫຍັງກັນແດ່? ສັງຄົມ, ເພດ, ສາສນາ, ການປະພຶດການກະທຳ.

5. ອ່ານ 4:10-30 ອະທິບາຍເຣື່ອງນ້ຳແຫ່ງຊີວິດ. ນາງຄົນນີ້ພະຍາຍາມທີ່ຈະປິດບັງເບື້ອງຫລັງຂອງຕົນເອງໄວ້ ມີແຕ່ພຣະເຢຊູຜູ້ດຽວທີ່ຊາບເຣື່ອງນີ້ໂດຍລະອຽດ. ແລະພຣະອົງກໍໄດ້ປະກາດວ່າພຣະອົງເປັນພຣະເມຊີອາ(4:26)

6. ອ່ານ 4:39-42 ເມື່ອອ່ານແລ້ວເຫັນວ່າເປັນຢ່າງໃດ, ຊາວຊະມາເຣັຽມີຄວາມຮັບຜິດຊອບຢ່າງໃດ? "ພຣະທັມຊົງບັງເກີດມາເປັນມະນຸດ" ທ່ານຈະຮັບຜິດຊອບຢ່າງໃດກັບພຣະອົງ, ທ່ານຈະຖືວ່າພຣະອົງເປັນເຫມືອນຄົນບ້າ, ທ່ານຈະຖືວ່າພຣະອົງເປັນເຜດຜີ, ຫລືທ່ານຈະຖືວ່າພຣະອົງເປັນພຣະເຈົ້າ ແລ້ວເຂົ້າມາກົ້ມຂາບພຣະອົງກໍສຸດແລ້ວແຕ່ທ່ານ. ຈົ່ງຕ້ອນຮັບພຣະອົງເຖີດ.

## <u>ຫນູນໃຈໃນການປະຕິບັດ:</u>

7. ໃຫ້ນັກຮຽນຕອບຄຳຖາມທຸກຂໍ້ໃນເຈັ້ຽບົດຮຽນ ແລ້ວສົນທະນາກັນໄປດ້ວຍ.

8. ໃຫ້ນັກຮຽນຄົນນຶ່ງອ້ອນວອນອະທິຖານປິດການຮຽນສຳລັບວັນນີ້.

*ດຣ. ບຸນໂຮມ ພົມມະຈັນ*

# <u>ຄຳແນະນຳສຳລັບຄຣູສອນ</u>

# <u>ບົດຮຽນທີ 4</u>

# <u>ຖວາຍກຽດແກ່ ພຣະບຸດ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ໂຢຮັນ 5:1-24

**<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u>** ໂຢຮັນ ບົດທີ 5

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ພຣະເຢຊູປະກາດຕົນເອງວ່າເປັນພຣະບຸດຂອງພຣະເຈົ້າ ແລະຊົງລົງມາກະທຳຕາມພຣະບິດາ.

**<u>ຄຳຖາມເພື່ອສຳຣວດ</u>:** ພວກເຮົາຈະຖວາຍກຽດແດ່ພຣະບຸດພຣະເຈົ້າຢ່າງໃດ?

**<u>ຈຸດປະສົງຂອງບົດຮຽນ:</u>** ເພື່ອຈະອະທິບາຍໃຫ້ເຫັນວ່າ ການຖວາຍກຽດແດ່ພຣະບຸດພຣະເຈົ້ານັ້ນພວກເຮົາຕ້ອງການຫຍັງແດ່?

## <u>ແຜນການສິດສອນ</u>

## <u>ນຳເຣື່ອງເຂົ້າສູ່ຊີວິດຈິງ:</u>

1. ຕຽມການສຶກສາໃນວັນນີ້, ວາງຄຳຖາມສອງຂໍ້ຕໍ່ໄປນີ້ : ແມ່ນຫຍັງຄືສິ່ງທີ່ມະນຸດຕ້ອງການຈາກພຣະເຈົ້າ? ພຣະເຈົ້າຕ້ອງການຫຍັງຈາກພວກເຮົາ? (ຄຳຕອບອາດຈະອອກມາວ່າ ຢາກໄດ້ສຸຂພາບອັນສົມບູນ, ບໍ່ມີພະຍາດ, ອວຍພອນໃຫ້ຄອບຄົວ, ຄວາມລອດພົ້ນ, ພຣະພອນທາງດ້ານການເງິນ. ສຳລັບຄຳຕອບຂໍ້ທີສອງກໍຄືວ່າ ການນະມັສການຈາກພວກເຮົາ, ຄວາມຮັກ, ແລະການຖວາຍຕົວ, ແລະຮັກຊຶ່ງກັນແລະກັນ, ບອກຄົນອື່ນກ່ຽວກັບພຣະເຢຊູ.)

2. ມື້ນີ້ ຈະໄດ້ເວົ້າເຖິງຄົນນຶ່ງທີ່ບໍ່ສາມາດຍ່າງໄດ້ເປັນເວລາສາມສິບແປດປີ. ຖ້າພວກເຮົາຖາມລາວ ວ່າເຈົ້າຕ້ອງການຫຍັງຈາກພຣະເຈົ້າ, ລາວຈະຕອບວ່າຢ່າງໃດ? (ຂ້ອຍຢາກຍ່າງໄດ້)
ໃຫ້ນັກຮຽນເບິ່ງ ໃນໂຢຮັນ ບົດທີ 5 ວ່າ ມີຫຍັງເກີດຂື້ນ.

3. ຂຽນລົງກະດານ ລຳດັບບົດຮຽນ :
ພວກເຮົາຕ້ອງການຫຍັງແດ່ຈາກພຣະເຈົ້າ? (5:1-9)
ພວກເຮົາຈະເຮັດຫຍັງແດ່ໃຫ້ກັບພຣະເຈົ້າ? (5:9-15)
ພຣະເຈົ້າຕ້ອງການຫຍັງແດ່ຈາກພວກເຮົາ ແລະ ພຣະອົງເຮັດຫຍັງແດ່ເພື່ອເຮົາ? (5:16-24)

## <u>ນຳພາສຶກສາພຣະຄັມພີ</u>

4. ທວນຄືນຫລັງຈັກໜ້ອຍນຶ່ງ ໃນໂຢຮັນ ບົດທີ 4 . ພຣະເຢຊູໄດ້ເດີນທາງໄປຊະມາເຣັຽ ແລ້ວກໍໄປຄາລິເລ ຮວມທັງໄປແຄວ້ນການາດ້ວຍ. ຫລັງຈາກນັ້ນໃນບົດທີ 5 ພຣະເຢຊູໄດ້ໄປກຸງເຢຣູຊາເລັມ.
ໃຫ້ຄົນນຶ່ງອ່ານ 5:1-6 ແລ້ວໃຫ້ອິງໃສ່ໃນເຈັ້ຽບົດຮຽນ ອະທິບາຍເຖິງສະພາບການຕ່າງໆ.

ຄຣູຈະອະທິບາຍ "ເຈົ້າຢາກດີພະຍາດບໍ່?" ຖ້າຈະເວົ້າແລ້ວ ກໍແມ່ນຄຳຢ້ອນຄຳເວົ້າ ເພາະພຣະເຢຊູກໍຮູ້ດີຢູ່ແລ້ວວ່າລາວຢາກດີ. ອີກຄຳນີ້ອາດຈະເວົ້າໄດ້ວ່າ ເຈົ້າຢາກໃຫ້ຂ້ອຍເຮັດຫຍັງໃຫ້ເຈົ້າ?

5. ອ່ານ ໂຢຮັນ 5:7 ແລ້ວອະທິບາຍເຖິງຄວາມເຊື່ອຂອງຊາວຢິວ ທີ່ມີຕໍ່ນ້ຳນັ້ນ.

6. ອ່ານ 5:8-15 ພຣະເຢຊູບອກຊາຍຄົນນັ້ນເຮັດສິ່ງທີ່ລາວຄວນຈະເຮັດ. ເວລາພວກເຮົາເຂົ້າມາຫາພຣະເຢຊູ ເຮົາກໍຄວນຈະເລືອກອັນເຮັດ. ຊາຍຄົນນີ້ ຟັງຄວາມແລະປະຕິບັດຕາມຄຳສັ່ງຂອງພຣະເຢຊູ ແຕ່ເວລາປະເຊີນໜ້າກັບຫົວໜ້າຄົນຢິວແລ້ວ ລາວຊ້ຳພັດຢາກຕິພຣະເຢຊູ. ພຣະເຢຊູປົວຄົນນີ້ທາງດ້ານຮ່າງກາຍ ແຕ່ພຣະເຢຊູບໍ່ໄດ້ບອກວ່າເຈົ້າລອດແລ້ວ ເໝືອນທີ່ພຣະອົງປົວຜ່ານມາ.
ເວລາພຣະອົງພົບລາວອີກເທື່ອໃໝ່ ພຣະອົງກໍໄດ້ບອກລາວວ່າ: ນີ້ແຫລະ ເຈົ້າດີພະຍາດແລ້ວ ຢ່າເຮັດບາບຕໍ່ໄປ ຢ້ານວ່າເຫດຮ້າຍກວ່ານັ້ນຈະເກີດກັບເຈົ້າອີກ." (5:14)
ຖ້າຈະເບິ່ງແລ້ວ ຊາຍຄົນນີ້ມັກຈະໂຍນເຣື່ອງໃສ່ຄົນອື່ນ ພວກເຮົາຄວນຫລີກລຽງການກະທຳເຊັ່ນ ບໍ່ວ່າຈະຢູ່ໃນສັງຄົມໃດກໍຕາມ.

7. ຫັນມາເບິ່ງຂໍ້ສຸດທ້າຍຂອງລຳດັບບົດຮຽນ ອ່ານ 5:16-24. ໃຫ້ນັກຮຽນຕັ້ງໃຈຟັງວ່າ ພຣະເຢຊູເວົ້າຫຍັງແດ່ກ່ຽວກັບພຣະອົງເອງ. ເນັ້ນໜັກຂໍ້ 16-18.
ພວກຢິວຄິດຢ່າງໃດກ່ຽວກັບພຣະເຢຊູ ຫລັງຈາກທີ່ເຂົາໄດ້ຍິນການກ່າວຄຳຈິງໂດຍພຣະອົງແລ້ວ

## ຄຳໜູນໃຈສຳລັບວັນນີ້:

8. ຂໍ້ທີ 23 ເພື່ອຄົນທັງປວງຈະໄດ້ຖວາຍກຽດແດ່ພຣະບຸດເໝືອນທີ່ເຂົາຖວາຍກຽດແດ່ພຣະບິດາ ຜູ້ໃດບໍ່ຖວາຍກຽດແດ່ພຣະບຸດ ຜູ້ນັ້ນກໍບໍ່ຖວາຍກຽດແດ່ພຣະບິດາຜູ້ຊົງໃຊ້ພຣະບຸດມາ.
ເຊັ່ນດຽວກັນ ອ່ານ ຂໍ້ທີ 18 ແລະ 19.

*ດຣ. ບຸນໂຮມ ພົມມະຈັນ*

# <u>ບົດແນະນຳຄຣູສອນ</u>
# <u>ບົດຮຽນທີ 5</u>
# <u>ໝັ້ນໃຈໃນພຣະເຢຊູ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ໂຢຮັນ 6:1-15, 25-35, 66-69
<u>ຂໍ້ພຣະຄັມພີທັງໝົດສຳລັບບົດຮຽນນີ້:</u> ໂຢຮັນ 6
<u>ຈຸດສຳຄັນຂອງບົດຮຽນນີ້:</u> ເພື່ອບອກໃຫ້ຮູ້ວ່າຄົນສ່ວນຫລາຍແມ່ນຢາກໄດ້ດຽວນີ້ ແທນທີ່ຈະມີຊີວິດຜູກພັນກັບພຣະອົງເສັຽກ່ອນ.
<u>ຄຳຖາມເພື່ອການສຳຣວດ:</u> ນອກຈາກພຣະເຢຊູແລ້ວເຮົາຫວັງເພິ່ງໃຜອີກ?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອສອນໃຫ້ຮູ້ວ່າເຮົາຕ້ອງການພຣະອົງຫລາຍກວ່າສິ່ງຂອງ.

<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ປະກາດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## <u>ບົດນຳ</u>

1. ຫາກພໍເປັນໄປໄດ້ໃຫ້ຄຣູນຳເອົາເຂົ້າຈີ່ຫລືເຂົ້າໜົມປັງຈັກຫ້າແຜ່ນ ແລະປານ້ອຍຈັກສອງໂຕມາແບ່ງປັນກັນກິນທີ່ຫ້ອງຮຽນ, ຫາກບໍ່ມີເຂົ້າຈີ່ແລະບໍ່ມີປາ ຖ້າມີຮູບແຕ້ມຫລືມີຮູບຖ່າຍກໍໃຫ້ເອົາຕິດກະດານກໍໄດ້, ຫລືຫາກຫາບໍ່ໄດ້ແທ້ໆຈຶ່ງແຕ້ມເຂົ້າຈີ່ຫ້າກ້ອນແລະປາສອງໂຕທີ່ກະດານ ແລ້ວແຕ້ມຄົນຫລາຍເທົ່າທີ່ຈະຫລາຍໄດ້ໃຫ້ນັກຮຽນໄດ້ເຫັນ.

2. ຫລັງຈາກນັກຮຽນກິນແລ້ວ ຂໍໃຫ້ນັກຮຽນເກັບເຂົ້າຈີ່ທີ່ເຫລືອນັ້ນເບິ່ງວ່າຈະເຫລືອຫລາຍປານໃດ?

### 3. <u>ຂໍໃຫ້ຜູ້ນຶ່ງອ່ານ 6:1-15 ຊົງມີອາຫານແກ່ທຸກຄົນ</u>

ກ. ຄົນຕິດຕາມພຣະເຢຊູເພາະເຂົາເຫັນໝາຍສຳຄັນ (ຂໍ້ 1-2).
ຂ. ເຫັນຄົນຫລວງຫລາຍມາເພາະຢາກເຂົ້າ ພຣະອົງກໍຊອກໃຫ້ເຂົາກິນ (ຂໍ້ 5).
ຄ. ຄຳວ່າ *ພວກເຮົາຈະ ຊື້ອາຫານທີ່ໃດໃຫ້ຄົນເຫລົ່ານີ້ກິນ* ອາດຈະມີຄວາມໝາຍສອງປະການຄື;
    1. ບໍ່ມີອາຫານຂາຍຫລາຍປານນັ້ນ.
    2. ບໍ່ມີເງິນພຽງພໍທີ່ຈະຊື້ອາຫານ.
ງ. ພຣະອົງຖາມເພື່ອຢາກຮູ້ວ່າສາວົກພຣະອົງຈະຄິດແນວໃດ? (ຂໍ້ 6).
ຈ. ພຣະເຢຊູສແດງເຖິງຄວາມຫ່ວງໃຍປະຊາຊົນທີ່ຂາດເຂົ້າປາອາຫານ.

ສ. ຊົງສັ່ງໃຫ້ນັ່ງລົງ ອາຈໝາຍຄວາມວ່າຍອມຕໍ່ພຣະອົງ (ຂໍ້ 10).

ຊ. ພຣະເຢຊູເຮັດການອັສຈັນໂດຍການລ້ຽງຫ້າພັນຄົນດ້ວຍເຂົ້າຈີ່ພຽງຫ້າກ້ອນ ແລະປາພຽງສອງໂຕ (ຂໍ້ 11-12). ແຖມຍັງເຫລືອອີກສິບສອງບຸງ.

## 4. <u>ຂໍ້ໃຫ້ຜູ້ນຶ່ງອ່ານ 6:25-36, 48-51 ມີອາຫານດີກວ່ານັ້ນ</u>

ກ. ປະຊາຊົນດີໃຈທີ່ເຫັນພຣະອົງ ເພາະຈະໄດ້ກິນ (ຂໍ້ 25-26).

ຂ. ພຣະອົງສເນີເອົາອາຫານດີກວ່າໃຫ້ເຂົາກິນ (ຂໍ້ 27).

ຄ. ອາຫານທີ່ກິນແລ້ວຍັງຫິວອີກ ພຣະອົງຮ້ອງອາຫານນັ້ນວ່າ ອາຫານສູນເສັຽໄປ (ຂໍ້ 27).

ງ. ປະຊາຊົນເຂົ້າໃຈຜິດຣະຫວ່າງເຮັດກິຈການຂອງພຣະເຈົ້າ ແລະການເຊື່ອໃນພຣະເຈົ້າ (ຂໍ້ 29).

ຈ. ພຣະເຢຊູອະທິບາຍເຣື່ອງມານາທີ່ມາຈາກພຣະເຈົ້າ ບໍ່ແມ່ນຈາກໂມເຊ (ຂໍ້ 30-33).

ສ. ພຣະເຢຊູຊົງຮັບປະກັນຜູ້ທີ່ມາຫາພຣະອົງຈະບໍ່ຫິວຈັກເທື່ອ (ຂໍ້ 35-36).

## 5. <u>ຂໍ້ໃຫ້ຜູ້ນຶ່ງອ່ານ 6:66-69 ຊົງປະກາດພຣະທັມ</u>

ກ. ພວກທີ່ຍັງອ່ອນຝ່າຍຄວາມເຊື່ອຖອຍໜີ (ຂໍ້ 66)

ຂ. ພຣະເຢຊູຊົງຖາມຄຳຖາມສຳຄັນກັບພວກສາວົກ (ຂໍ້ 67).

ຄ. ສາວົກສະແດງຄວາມຈົງຮັກພັກດີ (ຂໍ້ 68).

ງ.. *ພວກຂ້ານ້ອຍຈະໜີໄປຫາຜູ້ໃດ* ແປວ່າ ເຂົາບໍ່ມີຜູ້ໃດຈະເພິ່ງໄດ້ (ຂໍ້ 68ກ).

ຈ. *ທ່ານມີຖ້ອຍຄຳຊຶ່ງໃຫ້ມີຊີວິດອັນຕລອດໄປເປັນນິດ* ແປວ່າ ພຣະເຢຊູຊົງເປັນແຫລ່ງແຫ່ງຊີວິດ (ຂໍ້ 68ຂ).

ງ. *ເຮົານີ້ແຫລະ, ໄດ້ເລືອກພວກທ່ານ* ແປວ່າຜູ້ທີ່ພຣະອົງຊົງເລືອກຈະບໍ່ຖອຍໜີຈັກເທື່ອ (ຂໍ້ 69).

<u>ຄຳຖາມ:</u>

1. ບົດຮຽນນີ້ສອນຫຍັງທ່ານແດ່?

2. ເຮັດແນວໃດເຮົາຈຶ່ງຈະຕິດຕາມພຣະອົງດ້ວຍຄວາມຈົງຮັກພັກດີ?

3. ເຮັດແນວໃດເຮົາຈຶ່ງຈະບໍ່ຊອກສແວງຫາອາຫານຫລາຍກວ່າຊອກສແວງຫາພຣະອົງ?

4. ທ່ານຄິດວ່າທ່ານເປັນພວກໃດໃນຈຳນວນຄົນຕິດຕາມພຣະອົງ?

5. ທ່ານຈະບອກເຕືອນເພື່ອນຝູງໃນເຣື່ອງນີ້ແນວໃດ?

*ດຣ. ທຸມພັນ ວົງສຸຣິດທ໌*

# ບົດແນະນຳຄູສອນ
# ບົດຮຽນທີ 6
# ຕາຍແລ້ວຄືນມາອີກ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢຮັນ 11:1-13, 17-27, 38-44
**ຂໍ້ພຣະຄັມພີທັງຫມົດສຳລັບບົດຮຽນນີ້:** ໂຢຮັນ 11
**ຈຸດສຳຄັນຂອງບົດຮຽນນີ້:** ເພື່ອບອກໃຫ້ຮູ້ວ່າພຣະເຢຊູຜູ້ໃຫ້ຊີວິດນິຣັນ ແກ່ທຸກຄົນທີ່ເຊື່ອ.
**ຄຳຖາມເພື່ອການສຳຣວດ:** ທ່ານເຊື່ອບໍ່ວ່າທຸກຄົນທີ່ເຊື່ອໃນພຣະເຢຊູຈະບໍ່ຕາຍຈັກເທື່ອ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອສອນໃຫ້ຮູ້ວ່າອຳນາດການເອີ້ນຄົນຕາຍແລ້ວໃຫ້ຄືນມາເຮັດເຮົາເພີ້ມຄວາມເຊື່ອໃນພຣະອົງ.

## ບົດນຳ

ສາມເອື້ອຍນ້ອງນາງມາທາ, ນາງມາຣີອາ ແລະລາຊະໂຣ ເປັນຄອບຄົວທີ່ເຊື່ອແລະໃກ້ຊິດຮັກແພງກັບພຣະເຢຊູເປັນພິເສດ, ນັກສາສນາສາດຜູ້ນຶ່ງສັນນິຖານວ່າ ຄອບຄົວນີ້ອາດຈະເປັນຄອບຄົວມີພໍສົມຄວນ ເພິ່ນພິສູດວ່າສມັຍນັ້ນນ້ຳມັນຫອມນັ້ນ ຄົນຍາກຈົນຈະບໍ່ສາມາດມີໄວ້ໃນຄອບຄອງ ສ່ວນນາງມາຣີອາໄດ້ເອົານ້ຳມັນຫອມທາສົງພຣະບາດພຣະເຢຊູເພື່ອສະແດງເຖິງຄວາມຮັກແບບບູຊາ ສ່ວນນາງມາທາກໍຮັກພຣະເຢຊູແບບເທີດທູນໂດຍການຮັບໃຊ້, ພຣະເຢຊູເອງກໍຮັກຄອບເຮືອນນີ້ແບບພຣະເຈົ້າຊົງຮັກມະນຸດແລະພຣະອົງກໍຊົງພັກເຊົານຳຄອບຄົວນີ້ເມື່ອເວລາພຣະອົງສະເດັດມາກຸງເຢຣູຊາເລັມ ເພາະລະຍະເຮືອນກັບກຸງເຢຣູຊາເລັມຢູ່ໃກ້ກັນແດ່.

## ຂໍໃຫ້ຜູ້ນຶ່ງອ່ານ 11:1-13

ກ. ລາຊະໂຣປ່ວຍທີ່ບ້ານເບດທານີ ຫ່າງຈາກເຢຣູຊາເລັມປະມານ 2 ໄມ ນາງມາທາແລະນາງມາຣີອາຜູ້ເປັນເອື້ອຍເຫັນວ່ານ້ອງຊາຍຈະບໍ່ລອດຈຶ່ງໄປນຳຫາພຣະເຢຊູທີ່ກຸງເຢຣູຊາເລັມ ໂດຍຫວັງໃຈວ່າຈະໃຫ້ພຣະອົງມາປິ່ນປົວ (ຂໍ້1-3).

ຂ. ສອງເອື້ອຍນ້ອງບໍ່ໄດ້ອອກຊື່ລາຊະໂຣ ແຕ່ບອກພຣະເຢຊູວ່າ ຜູ້ທີ່ທ່ານຮັກແພງ ບົ່ງບອກເຮົາວ່າພຣະອົງມີຄວາມຮັກລາຊະໂຣຢ່າງຄົນໃກ້ຊິດກັນ (ຂໍ້ 3).

ຄ. ຄຣິສຕຽນທັງຫລາຍຄວນຮຽນເອົາແບບຢ່າງຂອງສອງເອື້ອຍນ້ອງນີ້ ຫາກມີຜູ້ໃດເຈັບເປັນຫລືບັນຫາຄອບຄົວຄວນຊອກສແວງຫາພຣະເຢຊູຕາມຄວາມເຊື່ອຂອງພວກເຮົາ.

ງ. ການປ່ວຍຂອງລາຊະໂຣເປັນແຜນການຂອງພຣະເຈົ້າ (ຂໍ້ 4).

ຈ. ພຣະເຢຊູບໍ່ໄດ້ສະເດັດໄປທັນທີແຕ່ລໍຖ້າອີກສອງວັນ ສອນໃຫ້ເຮົາຮູ້ວ່າເມື່ອເວລາເຮົາອ້ອນວອນລາງເທື່ອກໍໃຊ້ເວລາດົນນານຈຶ່ງໄດ້ຮັບຄຳຕອບ ເພາະທຸກຢ່າງເປັນຕາມເວລາຂອງພຣະເຈົ້າ (ຂໍ້ 5-6).

ສ. ພຣະເຢຊູບອກພວກສາວົກວ່າ ລາຊະໂຣເພື່ອນຂອງເຮົາກໍຫລັບໄປແລ້ວແປວ່າຕາຍແລ້ວ ແຕ່ສາວົກບໍ່ເຂົ້າໃຈຄຳເວົ້າຂອງພຣະອົງ (ຂໍ້ 11-13).

## ຂໍໃຫ້ຜູ້ນຶ່ງອ່ານ 11:17-27 ມາເພື່ອໃຫ້ຊີວິດ

ກ. ພຣະເຢຊູສະເດັດມາຮອດບ້ານເບດທານີ ລາຊະໂຣກໍຕາຍໄດ້ສີ່ວັນແລ້ວ, ເປັນຮູບພາບອັນນຶ່ງເມື່ອເວລາ

ພຣະເຢຊູສະເດັດລົງມາໃນໂລກນີ້ມະນຸດຮົາຕາຍແລ້ວໃນຄວາມຜິດບາບຕັ້ງດົນນານ (ຂໍ້ 17).

ຂ. ພວກຢິວທີ່ຮັກແພງກັບຄອບຄົວຜູ້ຕາຍກໍພາກັນມາອົບອຸ່ນຄອບຄົວສັນໃດ ຄຣິສຕຽນເຮົາເມື່ອມີການຕາຍກໍສົມຄວນໄປອົບອຸ່ນຄອບຄົວຜູ້ຕາຍສັນນັ້ນ (ຂໍ້ 20).

ຄ. ມາທາເຫັນພຣະເຢຊູມາຮອດກໍຮ້ອງໄຫ້ຕໍ່ພຣະເຢຊູວ່າ ຖ້າທ່ານຢູ່ທີ່ນີ້ນ້ອງຊາຍຂອງຂ້ານ້ອຍຄົງບໍ່ຕາຍມີຄວາມໝາຍສອງປະການຄື;

1. ຫາກພຣະອົງຢູ່ ພຣະອົງກໍຈະປົວໃຫ້ດີແລ້ວ.
2. ພຣະອົງມາຊ້າແລ້ວ.

ງ. ຄຳເວົ້າຂອງນາງເປັນຄວາມຈິງ ຫາກບ່ອນໃດຫລືຜູ້ໃດມີພຣະເຢຊູຢູ່ດ້ວຍຜູ້ນັ້ນຈະບໍ່ຕາຍ.

ຈ. ພຣະເຢຊູບອກນາງເຖິງສາມຄັ້ງວ່າ ລາຊະໂຣຈະຄືນມາ.

1. ນ້ອງຊາຍຂອງເຈົ້າຈະຄືນມາອີກ, ນາງກັບເຂົ້າໃຈວ່າແມ່ນການຄືນມາໃນວັນພິພາກສາ (23-24).
2. ຊົງບອກວ່າ ພຣະອົງຊົງເປັນແຫລ່ງຂອງຊີວິດ ຜູ້ທີ່ວາງໃຈເຊື່ອຈະບໍ່ຕາຍຈັກເທື່ອ ເຈົ້າເຊື່ອຂໍ້ນີ້ຫລື? ມາທາຕອບວ່າ ເຊື່ອແລ້ວ (ຂໍ້ 2-25
3. ສ່ວນຄັ້ງທີສາມແມ່ນຢູ່ໃນຂໍ້ວຂໍ້ຕໍ່ໄປໃນຂໍ້ 38 ພຣະເຢຊູບອກໃຫ້ຍົກຫີນອອກຈາກປາກອຸບໂມງແຕ່ນາງມາທາຫ້າມບໍ່ໃຫ້ເປີດ, ເປັນການບົ່ງບອກວ່າຫລາຍຄົນເຊື່ອພຣະເຢຊູ ແຕ່ບໍ່ເຂົ້າໃຈພຣະເຢຊູຢ່າງຄັກແນ່.

<u>ຂໍໃຫ້ຜູ້ນຶ່ງອ່ານ 11:38-44 ຄວາມຫວັງເປັນຈິງ</u>

ກ. ພຣະອົງຊົງສະເທືອນພຣະທັຍ ແປວ່າຮ້ອງໄຫ້, ການຮ້ອງໄຫ້ຂອງພຣະອົງສະແດງເຖິງຄວາມເປັນມະນຸດຢ່າງແທ້ຈິງ. (ຂໍ້ 38).

ຂ. ຊົງບອກໃຫ້ເປີດປາກອຸບໂມງເພື່ອໃຫ້ລາຊະໂຣຈະໄດ້ອອກມາ ນາງມາທາຫ້າມ ເພາະວ່າລາຊະໂຣຕາຍໄປສີ່ມື້ແລ້ວປານນີ້ສົບຄົງເໝັນຫລາຍແລ້ວ (ຂໍ້ 39).

ຄ. ພຣະເຢຊູກ່າວເຕືອນວ່າພຣະອົງບອກສອງຄັ້ງມາກ່ອນແລ້ວບໍ່ແມ່ນບໍ່ ຖ້າເຊື່ອຈະເຫັນສະງ່າຣາສີຂອງພຣະເຈົ້າ ແປວ່າ ຖ້າເຊື່ອລາວຈະຄືນມາ (ຂໍ້ 40).

ງ. ພຣະອົງຊົງອ້ອນວອນແລ້ວຮ້ອງຊື່ລາຊະໂຣໂດຍສເພາະ, ເພາະວ່າສົບໃນອຸບໂມງນັ້ນມີຫລວງຫລາຍ, ເມື່ອຮ້ອງແລ້ວລາຊະໂຣກໍຍ່າງອອກມາ ທັງມີຜ້າພັນໂຕຢູ່ (ຂໍ້ 41-44).

ຈ. ລາຊະໂຣຕາຍໄປສີ່ມື້ແລ້ວນາງມາທາຄິດວ່າເໝັນແລ້ວ ແຕ່ສິ່ງນີ້ບໍ່ແມ່ນສິ່ງເຫນືອເໝັນສຳລັບພຣະເຈົ້າ, ຫາກພຣະເຈົ້າພໍພຣະທັຍ ບໍ່ວ່າແຕ່ສົບເນົ່າເປື່ອຍ ແມ່ນແຕ່ກະດູກຫລ້ອນທີ່ຕາຍໄປຫລາຍປີພຣະເຈົ້າກໍເອົາຄືນມາເປັນຄົນໄດ້ (ເອເຊກຽນ 37).

*ດຣ. ທຸນພັນ ວົງສຸຣິດທ໌*

# ບົດແນະນຳຄຣູສອນ
## ບົດຮຽນທີ 7
## ຮັກບໍ່ມີພົມແດນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢຮັນ 13: 1-17, 34-35
**ຂໍ້ພຣະຄັມພີທັງຫມົດສຳລັບບົດຮຽນນີ້:** ໂຢຮັນ 13
**ຈຸດສຳຄັນຂອງບົດຮຽນນີ້:** ເພື່ອຮຽນເຮັດຕາມແບບຢ່າງພຣະອາຈານ
**ຄຳຖາມເພື່ອການສຳຣວດ:** ພຣະເຢຊູຕ້ອງການໃຫ້ເຮົາເຮັດແບບຢ່າງອັນໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອໃຫ້ເຮົາຕັດສິນໃຈໃຫ້ພຣະເຢຊູເປັນຜູ້ນຳໃນຊີວິດ.

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ປະກາດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## ບົດນຳ

ບົດຮຽນວັນນີ້ແມ່ນເຫດການທີ່ເກີດຂຶ້ນສອງວັນກ່ອນງານປັສຄາເພື່ອລະນຶກເຖິງພຣະຄຸນພຣະເຈົ້າທີ່ຊົງນຳອິສຣາເອນອອກຈາກການເປັນຂ້ອຍຂ້າທີ່ປະເທດເອຢິບ, ແລະໃນເວລາດຽວນັ້ນແມ່ນຈວນເວລາພຣະເຢຊູຈຳຕ້ອງສະເດັດກັບໄປຫາພຣະບິດາແລ້ວ ແຕ່ພຣະອົງບໍ່ຢາກຈາກໄປ ເພາະຮັກແລະເປັນຫ່ວງພວກສາວົກຂອງພຣະອົງ.

1. ຖາມນັກຮຽນດັ່ງນີ້; ເຮົາຈະພິສູດຄວາມຮັກຂອງເຮົາໄດ້ແນວໃດ? ໃຫ້ເວລານັກຮຽນຕອບຈັກສອງຄົນ.

໒. ບົດຮຽນວັນນີ້ຈະເວົ້າເຣື່ອງ ພຣະເຢຊູໄດ້ພິສູດຄວາມຂອງພຣະອົງ **ຮັກບໍ່ມີພົມແດນ** (ຂຽນຫົວເຣື່ອງລົງກະດານ).

3. **ຂໍໃຫ້ຜູ້ນຶ່ງອ່ານ ໂຢຮັນ 13:1-5 ຄວາມຮັກທີ່ສະແດງອອກ**

ກ. ກ່ອນເຖິງເວລາເທສການປັສຄາ (ຂໍ້ 1ກ).

1. ແມ່ນສອງວັນກ່ອນປັສຄາ
໒. ປັສຄາຄັ້ງນີ້ແມ່ນພິທີຈາລຶກພຣະຄຸນທີ່ນຳອິສຣາເອນອອກມາຈາກການເປັນຂ້ອຍຂ້າທີ່ເອຢິບ.

ຂ. ພຣະອົງຊົງຊາບວ່າຍາມຂອງຕົນ (ຂໍ້ 1ຂ). ແປວ່າພຣະເຢຊູຮູ້ວ່າຈະຕ້ອງຕາຍ ແລະກັບຄືນໄປສວັນ

ຄ. ຊົງຮັກພວກຂອງພຣະອົງໃນໂລກນີ້ຈົນເຖິງທີ່ສຸກ (ຂໍ້ 1ຄ). ແປວ່າຮັກສາວົກຈົນສຸດອົກສຸດໃຈ.

ງ. ມານເຂົ້າດົນໃຈຢູດາ ເພື່ອບັງຄັບໃຈຂອງລາວ(ຂໍ້ ໒). ຄຳເຫັນຂອງສາສນາສາດມີສອງປະເດັນຄື;

1. ມານເຂົ້າມາກ່ອນແລ້ວ.
໒. ມານເຂົ້າໃນຂະນະທີ່ກິນເຂົ້າ. ແຕ່ທັງສອງເປີດເຜີຍວ່າ ຢູດາເປີດໂອກາດໃຫ້ມານ.

ຈ. ຊົງຊາບວ່າພຣະບິດາຊົງປະທານສິ່ງທັງປວງໃຫ້ຢູ່ໃນພຣະຫັດ (ຂໍ້ 3). ແປວ່າມານຊາຕານຢູ່ໃນໃຈຂອງຢູດາບໍ່ສາມາດຢັບຢັ້ງພຣະເຢຊູໄດ້.

ສ. ຊົງຖອດເຄື່ອງທົງຊັ້ນນອກ ແລະເອົາຜ້າຮັດແອວ (ຂໍ້ 4-5). ແປວ່າຄວາມຮັກທີ່ສະແດງອອກເຖິງການກະທຳ, ເປັນນາຍແຕ່ແຕ່ງຕົວຄືຄົນໃຊ້ ແລະຍັງຫ້າງຫາເຄື່ອງລ້າງຕີນໂດຍພຣະອົງເອງ.

ຊ. ເຖິງແມ່ນຢູດາຈະມີຊາຕານສິງຢູ່ ພຣະອົງກໍລ້າງຕີນລາວເພື່ອສະແດງຄວາມຮັກທີ່ບໍ່ມີພົມແດນ.

4. <u>ຂໍໃຫ້ຜູ້ນຶ່ງອ່ານ ໂຢຮັນ 13:6-11 ບໍ່ສົມຄວນຈະລ້າງຕີນ</u>

ກ. ທ່ານຈະລ້າງຕີນຂ້ານ້ອຍຫລື (ຂໍ້ 6ຂ). ແປວ່າ ເປໂຕຄິດວ່າບໍ່ສົມຄວນຈະໃຫ້ພຣະເຢຊູມາລ້າງຕີນລາວ.

ຂ. ສິ່ງທີ່ເຮົາເຮັດເວລານີ້ທ່ານຍັງບໍ່ຮູ້ເຣື່ອງ (ຂໍ້ 7). ແປວ່າຍັງບໍ່ທັນເຖິງເວລາເປີດເຜີຍໃຫ້ເຂົ້າໃຈ

ຄ. ຖ້າເຮົາບໍ່ລ້າງຕີນທ່ານ ທ່ານຈະບໍ່ມີສ່ວນໃນເຮົາ (ຂໍ້ 8). ເບິ່ງໃນບົດສອນ.

ງ. ເປໂຕຂໍໃຫ້ລ້າງມື ແລະລ້າງຫົວ (ຂໍ້ 9-10). ເບິ່ງໃນບົດສອນ.

ຈ. ທ່ານທັງຫລາຍບໍ່ສະອາດທຸກຄົນ (ຂໍ້ 11). ເພິ່ນເວົ້າເຖິງຢູດາ.

5. <u>ຂໍໃຫ້ຜູ້ນຶ່ງອ່ານ ໂຢຮັນ 13:12-17 ຄວາມໝາຍຂອງການລ້າງຕີນ</u>

ກ. ຫລັງຈາກລ້າງຕີນແລ້ວພຣະອົງຊົງສັ່ງສອນ ແລະຖາມ *ທ່ານທັງຫລາຍເຂົ້າໃຈໃນສິ່ງທີ່ເຮົາເຮັດຕໍ່ພວກທ່ານແລ້ວຫລື* (ຂໍ້ 12). ພວກສາວົກບໍ່ມີຄຳຕອບໃດໆ.

ຂ. ຊົງອະທິບາຍຄຳວ່າຄວາມໝາຍຂອງການລ້າງຕີນ (ຂໍ້ 13-17).

6. <u>ຂໍໃຫ້ຜູ້ນຶ່ງອ່ານ ໂຢຮັນ 13:34-35 ຄຳສັ່ງໃຫມ່</u>

ກ. ຮັກຊຶ່ງກັນແລະກັນບໍ່ແມ່ນຄຳສັ່ງໃໝ່ ແຕ່ຮັກແລະເຮັດຄືພຣະເຢຊູນັ້ນເປັນສິ່ງໃໝ່ (ຂໍ້ 34). ອ່ານກົດລະບຽບຂອງພວກເລວີ 19:18 ເຈົ້າຢ່າແກ້ແຄ້ນຫລືຜູກພຍາບາດລູກຫລານຍາດພີ່ນ້ອງຂອງເຈົ້າ ແຕ່ເຈົ້າຈົ່ງຮັກເພື່ອນບ້ານເຫມືອນຮັກຕົນເອງ ເຮົາຄືພຣະຜູ້ເປັນເຈົ້າ

ຂ. ຮັກຊຶ່ງກັນແລະກັນຕາມຄຳສອນ ຄົນທັງປວງຈະຮູ້ເອງວ່າເຮົາເປັນສາວົກຂອງພຣະອົງ (ຂໍ້ 35).

ຄ. ຄົນທັງປວງ ໝາຍເຖິງຄົນທີ່ເຊື່ອແລະບໍ່ເຊື່ອ

<u>ຄຳຖາມ:</u>

1. ພຣະເຢຊູເວົ້າຫຍັງກັບສາວົກ ແລະຄຳເວົ້ານີ້ສະທ້ອນມາເຖິງເຮົາຢ່າງໃດ?

2. ພຣະອົງພິສູດຄວາມຮັກຕໍ່ສາວົກ ຖ້າເຮົາຮ້ອງເຮົາວ່າເຮົາເປັນສາວົກເຮົາຈະພິສູດແນວໃດ?

*ດຣ. ທຸນພັນ ວົງສຸຣິດທ໌*

# ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 8
## ຈົ່ງໝັ້ນໃຈ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢຮັນ 14: 1-11, 15-18, 25-27

**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ໂຢຮັນ 14: 1-31

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຢຊູຊົງປະກັນວ່າພວກເຮົາຈະບໍ່ຢູ່ໂດດດ່ຽວ ແຕ່ພຣະອົງຈະຊົງຢູ່ກັບເຮົາຕລອດໄປ.

**ຄຳຖາມເພື່ອການສຳຣວດ:** ພວກເຮົາຈະຢູ່ກັບໂລກທີ່ກຳລັງປ່ຽນແປງແລະສູນຫາຍນີ້ແນວໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະຮູ້ວ່າພວກເຮົາສາມາດມີຄວາມໝັ້ນໃຈໃນພຣະຄຣິດສຳລັບການຕໍ່ສູ້ກັບຄວາມລຳບາກຂອງຊີວິດ.

### ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ປະກາດຂ່າວປະເສີດກັບທຸກໆຄົນ.

## ແຜນການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ຊັກຊວນນັກຮຽນໃຫ້ທວນຄິດເຖິງຄວາມສູນເສັຽອັນຍິ່ງໃຫຍ່ທີ່ເກີດຂຶ້ນກັບພວກເຂົາເຈົ້າ. (ການຕາຍຂອງສາມີຫລືພັລຍາ, ການຕົກງານ). ໃຫ້ຂຽນຄຳຕອບໃສ່ກະດານ.

2. ໃຫ້ເວົ້າວ່າ, ກ່ອນທີ່ພຣະເຢຊູຈະຈາກພວກສາວົກໄປ ພວກເຂົາອາດຈະມີຄຳຖາມຫລາຍໆຢ່າງ ແລະພວກເຂົາອາດຈະມີຄວາມກັງວົນໃຈ. ໃຫ້ພວກເຮົາເບິ່ງສິ່ງທີ່ພຣະເຢຊູໄດ້ເວົ້າເພື່ອໃຫ້ຄວາມໝັ້ນໃຈກັບພວກເຂົາ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ສລຸບສາກຕ່າງໆແລະເນື້ອໃນສ່ວນໃຫຍ່ຂອງພຣະທັມໂຢຮັນ 14 ໃຫ້ນັກຮຽນຟັງ.

4. ອ່ານ ໂຢຮັນ 14:1-7. ຖາມ: ພວກສາວົກຄິດວ່າພຣະເຢຊູເວົ້າເຣື່ອງຫຍັງເວລາພຣະອົງເວົ້າເຖິງປະສາດຂອງພຣະບິດາ? ພຣະເຢຊູຊົງມີພຣະປະສົງໃຫ້ພວກເຂົາຄິດເຖິງຫຍັງ?
5. ອ່ານໂຢຮັນ 14:8-11. ໃຫ້ຕັ້ງໃຈເບິ່ງ 6 ແລະ 9. ຖາມ: ພວກສາວົກຕ້ອງການຫຍັງຈາກພຣະເຢຊູ? ພຣະອົງໃຫ້

ຄຳຕອບແນວໃດ? ພຣະເຢຊູຈະເປັນຄຳຕອບສຳລັບຄຳຖາມຂອງພວກເຂົາເຣື່ອງພຣະອົງຈະໄປໃສແລະເຣື່ອງພຣະ ບິດາໄດ້ວິທີໃດ?

6. ໃຊ້ບົດຮຽນ ແລະອຸປກອນອື່ນໆຊ່ວຍ; ອະທິບາຍວ່າໃຜຄືພຣະວິນຍານບໍຣິສຸດ ແລະແມ່ນຫຍັງແດ່ຄືພັນທະກິດຂອງພຣະອົງໃນໂລກນີ້.

7. ອ່ານໂຢຮັນ 14:27. ສັງເກດເບິ່ງຄຳເວົ້າຂອງພຣະເຢຊູໃນ 14:1 ແລະຄຳເວົ້າຂອງພຣະອົງໃນຂໍ້ 27 ຊຶ່ງມີຄຳສັ່ງຄ້າຍໆຄືກັນ.

8. ເບິ່ງຄຳຖາມໃນຕອນທ້າຍຂອງບົດຮຽນນີ້. ຫລືທ່ານອາດຈະເລືອກສອງຫລືສາມຂໍ້ ທີ່ທ່ານສົນໃຈເພື່ອການສົນທາ.

## <u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

9. ທົບທວນເບິ່ງພຣະທັມບາງຕອນ ແລ້ວສລຸບວິທີຫລືສິ່ງທີ່ພຣະເຢຊູຊົງໃຊ້ເພື່ອໜູນໃຈພວກສາວົກ. ທ່ານອາດຈະຂຽນສິ່ງເຫລົ່ານັ້ນໃສ່ກະດາດໄວ້ຕ່າງຫາກ ແລ້ວພິມຢາຍໃຫ້ນັກຮຽນ ເມື່ອມາເຖິງຕອນນີ້. ແນະນຳໃຫ້ພວກເຂົາທົບທວນເບິ່ງເລື້ອຍໆ. ໃຊ້ຄຳຖາມຕໍ່ໄປນີ້ເພື່ອສົນທະນາ:

- ມີຫຍັງແດ່ທີ່ຖືກກັບສະພາບຕ່າງໆທີ່ໄດ້ເວົ້າກັນໃນພາກຕົ້ນຂອງບົດຮຽນ? ຖືກວິທີໃດ?
- ພວກເຮົາຈະສູ້ທົນກັບການປ່ຽນແປງໃນໂລກຂອງພວກເຮົາວິທີໃດ? ພວກເຮົາຈະພົບຄວາມໝັ້ນໃຈໃນພຣະຄຣິດໄດ້ວິທີໃດ ເວລາພວກເຮົາພົບຄວາມທຸກລຳບາກໃນຊີວິດ?

ໃຫ້ເວລາເພື່ອການຄິດພິຈາຣະນາຄຳຖາມນີ້. ອ້ອນວອນປິດການສຶກສາພຣະທັມ.

*ດຣ. ສິດນີ ຄານ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 9
# ຈົ່ງສນິດຢູ່ໃນພຣະເຢຊູ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢຮັນ 15: 1-17
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ໂຢຮັນ 15--17
**ຈຸດສຳຄັນຂອງບົດຮຽນນີ້:** ການສນິດຢູ່ໃນພຣະເຢຊູນຳໄປສູ່ການເກີດຜົນໃນການຮັບໃຊ້, ແລະເປັນເຄື່ອງໝາຍຂອງຜູ້ ຕິດຕາມພຣະເຢຊູທີ່ແທ້ຈິງ.
**ຄຳຖາມເພື່ອການສຳຣວດ:** "ຄຣິສຕຽນບໍ່ເກີດຜົນ" ເປັນຄຳເວົ້າທີ່ກົງກັນຂ້າມບໍ່?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອພິສູດເບິ່ງຊີວິດວ່າ ຂ້າພະເຈົ້າໄດ້ສັດຊື່ຮັບໃຊ້ພຣະຄຣິດບໍ່?

## ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ປະກາດຂ່າວປະເສີດກັບທຸກຄົນ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ເຊື່ອຟັງແລະຮັບໃຊ້ພຣະເຢຊູໂດຍຮັບໃຊ້ຄວາມຂາດເຂີນດ້ານຮ່າງກາຍ, ວິນຍານ, ແລະຈິດໃຈ.
- ຈັດຕຽມຄົນເພື່ອເປັນຜູ້ນຳຮັບໃຊ້.

## ແຜນການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ຖາມນັກຮຽນວ່າປັດຈຸບັນເຂົາເຈົ້າເປັນສະມາຊິກຂອງກຸ່ມໃດແດ່? ໃຫ້ບາງຄົນຕອບ. ຄຳຕອບອາດຈະເປັນ ທີມກິລາ, ກຸ່ມນັກຮ້ອງ, ກຸ່ມລູກເສືອ, ສະມາຄົມ, ແລະຕໍ່ໆໄປ... ຖາມອີກວ່າ ພວກເຂົາຕ້ອງເຮັດຫຍັງແດ່ເພື່ອຮັກສາການເປັນສະມາຊິກນັ້ນ?

2. ເວົ້າວ່າ, ຕອນທີ່ຍັງຢູ່ຫ້ອງກິນເຂົ້າຊັ້ນເທິງ, ພຣະເຢຊູຊົງສອນພວກສາວົກເຣື່ອງການເປັນສະມາຊິກຂອງພຣະອົງ. ພວກເຮົາຈະສຶກສາເບິ່ງວ່າພຣະທັມຕອນນີ້ຈະຖືກກັບພວກເຮົາບໍ່?

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ອ່ານໂຢຮັນ 15:4-7. ນຳພານັກຮຽນໃນການສົນທະນາຄວາມໝາຍຂອງການ "ເຂົ້າສນິດ" ຢູ່ໃນພຣະເຢຊູ. ຖາມ: ພວກເຮົາຈະຕ້ອງເຮັດຫຍັງແດ່ເພື່ອຈະເຂົ້າສນິດ ຫລືດຳເນີນຊີວິດໃນພຣະຄຣິດ? ການເຂົ້າສນິດແມ່ນຜົນມາຈາກການໄດ້ຮັບຄວາມລອດພົ້ນບໍ່, ຫລືພວກເຮົາຕ້ອງເຮັດຫຍັງຕື່ມອີກ?

4. ຖາມພວກນັກຮຽນວ່າ ພວກເຂົາເຈົ້າຈື່ຂໍ້ພຣະຄັມພີບົດອື່ນບໍ່ທີ່ເວົ້າເຣື່ອງໝາກຜົນ.(ມັດທາຍ 3:8-10; 7:16-20; 12:33; 21:33-34; ຄາລາເຕັຽ 5:22-23). ຖາມວ່າພຣະທັມເຫລົ່ານີ້ໄດ້ຊ່ວຍເຂົາເຈົ້າໃຫ້ເຂົ້າໃຈເຣື່ອງໝາກຜົນທີ່ພຣະເຢຊູກໍາລັງບັລຍາຍຢູ່ໃນຕອນນີ້ບໍ່. ເບິ່ງ "ການເກີດຜົນ" ໃນພາກສຸດທ້າຍຂອງບົດຮຽນນີ້. ຊ່ວຍໃຫ້ທຸກຄົນເຫັນພ້ອມນໍາກັນວ່າການເກີດຜົນຂອງຄຣິສຕຽນນັ້ນໝາຍເຖິງຫຍັງ.

5. ອ່ານໂຢຮັນ 15:10-17 ແລະໃຫ້ທຸກຄົນຟັງເບິ່ງຄວາມສັມພັນຂອງພຣະເຢຊູກັບພວກສາວົກ. ໃຫ້ບາງຄົນເວົ້າ. ບອກນັກຮຽນວ່າພຣະເຢຊູກໍາລັງອະທິບາຍວິທີໃໝ່ ຂອງການມີຄວາມສັມພັນຣະຫວ່າງສາວົກແລະພຣະອົງ. ພວກເຂົາບໍ່ໄດ້ເປັນຂ້ອຍໃຊ້ ຫລືນັກຮຽນ; ແຕ່ພວກເຂົາໄດ້ກາຍເປັນມິດສະຫາຍຂອງພຣະອົງ. ຖາມ: ອີງຕາມພຣະທັມນີ້, ຄວາມຮັບຜິດຊອບ ແລະສິດທິໃນການເປັນມິດສະຫາຍຂອງພຣະເຢຊູມີຫຍັງແດ່? ຂໍຄໍາຕອບ. ຂຽນໃສ່ກະດານ; ຂ້າງນຶ່ງຂຽນຫົວຂໍ້ໃສ່ "ສິດທິ" ແລະອີກຂ້າງນຶ່ງໃຫ້ຂຽນ "ຄວາມຮັບຜິດຊອບ." (ສິດທິ: ຄວາມຍິນດີ, ຮູ້ພັນທະກິດຂອງເຈົ້ານາຍ, ເກີດຜົນ, ໄດ້ສິ່ງທີ່ອ້ອນວອນຂໍໃນພຣະນາມພຣະເຢຊູ. ຄວາມຮັບຜິດຊອບ: ເຊື່ອຟັງພຣະບັນຍັດ, ຮັກກັນແລະກັນ, ອອກໄປປະກາດ, ແລະເກີດຜົນ).

## <u>ນໍາພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

6. ຖ້າເວລາພໍໃຫ້ນໍາພາການສົນທະນາຄໍາຖາມໃນທ້າຍຂອງບົດຮຽນ, ທ່ານອາດຈະເລືອກເອົາສອງຫລືສາມຂໍ້ທີ່ທ່ານຄິດວ່າເປັນເຣື່ອງທີ່ທຸກຄົນຈະຕ້ອງຮູ້ໃຫ້ແຈ່ມແຈ້ງ.

7. ໃຫ້ນັກຮຽນຂຽນຄໍາອະທິບາຍວ່າການ "ເຂົ້າສນິດຢູ່ໃນພຣະຄຣິດ" ມີຄວາມໝາຍແນວໃດແດ່ສໍາລັບຊີວິດຂອງຕົວເອງ. ຖາມວ່າແຕ່ລະຄົນໄດ້ເຮັດຕາມທີ່ໄດ້ຂຽນໄວ້ນັ້ນບໍ່? ຊັກຊວນໃຫ້ແຕ່ລະຄົນພິສູດເບິ່ງຄວາມສັດຊື່ຂອງຕົວເອງໃນເຣື່ອງນີ້. ປິດການຮຽນດ້ວຍການອ້ອນວອນໃຫ້ທຸກໆຄົນໄດ້ເຂົ້າສນິດຢ່າງໃກ້ຊິດກັບພຣະເຢຊູ ແລະໃຫ້ທຸກຄົນໄດ້ມີຄວາມສັດຊື່ຕໍ່ພຣະອົງຫລາຍຂຶ້ນ.

*ດຣ. ສີດາ ຄານ*

# ຄໍາແນະນໍາສໍາລັບຄຣູສອນ
# ບົດຮຽນທີ 10
# ພຣະເຢຊູຊົງຕ້ອງການຫຍັງຈາກພວກສາວົກ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ໂຢຮັນ 17

**ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:** ໂຢຮັນ 17

**ຈຸດສໍາຄັນຂອງບົດຮຽນນີ້:** ພຣະເຢຊູຊົງອ້ອນວອນເພື່ອພວກສາວົກ, ເພື່ອການປົກປັກຮັກສາຈາກມານຮ້າຍ, ເພື່ອການຮັບໃຊ້ໃນໂລກ, ແລະເພື່ອຄວາມເປັນອັນນຶ່ງອັນດຽວກັນຂອງພວກສາວົກ, ອັນນຶ່ງອັນດຽວກັບພຣະເຈົ້າ, ແລະ ອັນນຶ່ງອັນດຽວກັບພຣະອົງ.

**ຄໍາຖາມເພື່ອການສໍາຣວດ:** ພຣະເຢຊູຊົງຕ້ອງການສິ່ງໃດຈາກພວກເຮົາ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອການຕັດສິນໃຈວ່າຈະໃຫ້ຄໍາອ້ອນວອນຂອງພຣະຄຣິດແນວໃດເກີດຂຶ້ນກັບຊີວິດຂອງຂ້ອຍ?

### ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສໍາຄັນສໍາລັບຊີວິດແລະການຮັບໃຊ້.
- ປະກາດຂ່າວປະເສີດກັບທຸກຄົນ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ເຊື່ອຟັງແລະຮັບໃຊ້ພຣະເຢຊູໂດຍຮັບໃຊ້ຄວາມຂາດເຂີນດ້ານຮ່າງກາຍ, ວິນຍານ, ແລະຈິດໃຈ.
- ຈັດຕຽມຄົນເພື່ອເປັນຜູ້ນໍາຮັບໃຊ້.

## ແຜນສໍາລັບການສອນ

**ນໍາເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)**

1. ຖ້າພຣະເຈົ້າຢາກຈະຕອບສນອງຄໍາອ້ອນວອນຂອງທ່ານສາມຢ່າງ, ທ່ານຈະອ້ອນວອນຂໍສິ່ງໃດແດ່? ໃຫ້ເວລາຕອບ. ທ່ານອາດຈະຢາຍເຈັ້ຽແລະສໍໃຫ້ທຸກຄົນເພື່ອພວກເຂົາເຈົ້າຈະໄດ້ບັນທຶກຄໍາຕອບ.

2. ເວົ້າວ່າ, ໂຢຮັນ 13-17 ໄດ້ບັນທຶກຄວາມຄິດຫລາຍໆຢ່າງຂອງພຣະເຢຊູໃນຄາວສຸດທ້າຍ. ໂຢຮັນ 17 ເປັນພາກສລູບເຣື່ອງທີ່ພຣະອົງໄດ້ຄິດໄວ້ ພ້ອມທັງຄໍາອ້ອນວອນຂອງພຣະອົງສໍາລັບພວກສາວົກ.

**ນໍາພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)**

3. ໃນໂຢຮັນ 17:4, ພຣະເຢຊູຊົງກ່າວວ່າ "ຂ້ານ້ອຍໄດ້ເຮັດກິຈການທີ່ພຣະອົງຊົງໃຫ້ຂ້ານ້ອຍເຮັດນັ້ນສໍາເຣັດແລ້ວ,"

ທັງໆທີ່ການຖືກຄຶງທີ່ໄມ້ກາງແຂນຍັງບໍ່ໄດ້ເກີດຂຶ້ນເທື່ອ. ຖາມ: ທ່ານເຄີຍຄິດເຖິງວຽກອັນມະຫາສານ, ເຈັບປວດ, ຫລືລຳບາກທີ່ພຣະເຈົ້າໄດ້ຊົງມອບໄວ້ຕໍ່ໜ້າທ່ານບໍ່? ທ່ານຕັ້ງໃຈທີ່ຈະເຮັດໃຫ້ສຳເຣັດເໝືອນພຣະເຢຊູບໍ່? ເປັນຫຍັງ? ມີຫຍັງແດ່ທີ່ຈະຊ່ວຍພວກເຮົາໃຫ້ມີຄວາມຕັ້ງໃຈເໝືອນພຣະເຢຊູໃນຕອນນັ້ນ?

4. ຖາມ: ພຣະເຢຊູໄດ້ອ້ອນວອນແນວໃດແດ່ສຳລັບພວກສາວົກ? ພາພວກນັກຮຽນຊອກຫາໃຫ້ພົບຄຳຕອບໃນໂຢຮັນ 17: 6-19. (ການພິທັກຮັກສາ, ການເປັນອັນນຶ່ງອັນດຽວກັນ, ການຊຳຣະໃຫ້ບໍຣິສຸດ, ແລະການ ຮັບໃຊ້)

5. ຖາມ: ຜູ້ທີ່ເຊື່ອຕ້ອງການ, ການພິທັກຮັກສາຈາກຫຍັງໃນສມັຍນີ້? ຄຳອ້ອນວອນຂອງພຣະເຢຊູມີຄວາມໝາຍຫຍັງແດ່ສຳລັບຄຣິສຕຽນທີ່ກຳລັງຕໍ່ສູ້ກັບຄວາມລຳບາກ? ມີຫຍັງແດ່ທີ່ບໍ່ຢູ່ໃນການອ້ອນວອນເພື່ອພຣະເຢຊູ? ໃຊ້ເວລາເພື່ອການຕອບ ຫລືການສົນທະນາ.

6. ກ່າວວ່າ, ພຣະເຢຊູໄດ້ຊົງອ້ອນວອນເພື່ອຄວາມເປັນອັນນຶ່ງອັນດຽວກັນໃນກຸ່ມຜູ້ເຊື່ອ. ນຳການສົນທະນາເຣື່ອງການເປັນອັນນຶ່ງອັນດຽວກັນຂອງຄຣິສຕຽນ ໂດຍໃຊ້ຄຳຖາມຕໍ່ໄປນີ້:
   ກ. ມີເຣື່ອງໃດແດ່ທີ່ເຮັດໃຫ້ຄຣິສຕຽນແຕກແຍກກັນ?
   ຂ. ມີຫຍັງແດ່ທີ່ຄຣິສຕຽນເຊື່ອຄ້າຍຄືກັນ?
   ຄ. ການມີຫລາຍຄະນະຫລືຫລາຍຄຣິສຕະຈັກໄດ້ສະແດງເຖິງການບໍ່ເປັນອັນນຶ່ງອັນດຽວກັນຂອງຄຣິສຕຽນບໍ່? ອະທິບາຍ.
   ງ. ຄຣິສຕະຈັກຄວນເຮັດແນວໃດກັບເຣື່ອງທີ່ພາໃຫ້ມີຄວາມແຕກແຍກ?
   ຈ. ການປະກາດພຣະທັມໃຫ້ກັບທຸກຄົນໃນໂລກຈະຊ່ວຍຄວາມເປັນອັນນຶ່ງອັນດຽວກັນໃນຄຣິສຕະຈັກບໍ່?

7. ຖາມ: "ການຢູ່ໃນໂລກນີ້" ຫລື "ການຢູ່ຝ່າຍໂລກ" ມີຄວາມໝາຍແນວໃດ? ໃຫ້ເວລາອະທິບາຍ. ແລ້ວຖາມວ່າ, ພວກເຮົາຢູ່ໃນໂລກໃນລັກສະນະໃດ? ແລະພວກເຮົາບໍ່ຢູ່ຝ່າຍໂລກແນວໃດ? ໃຫ້ເວລາຕອບ. ທ້າຍສຸດໃຫ້ຖາມວ່າ, ພວກເຮົາຢູ່ໃນໂລກ ແຕ່ພວກເຮົາບໍ່ໄດ້ເປັນຝ່າຍໂລກເພື່ອຈຸດປະສົງແນວໃດ? (17:18)

8. ພວກເຮົາໄດ້ເຫັນຄຳວ່າ "ກຽດຕິຍົດ" ແລະ "ການມີກຽດຕິຍົດ" ຫລາຍໆເທື່ອໃນໂຢຮັນ 17. ຖາມ: ຄຳອ້ອນວອນຂອງພຣະເຢຊູເພື່ອພວກສາວົກມີສ່ວນແນວໃດໃນເຣື່ອງການນຳກຽດຕິຍົດມາສູ່ພຣະເຈົ້າ?

## <u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

9. ໃຫ້ທຸກຄົນເບິ່ງ "ຈຸດສຳຄັນຂອງບົດຮຽນນີ້." ຖາມ: ທ່ານຈະເຮັດແນວໃດເພື່ອໃຫ້ຄຳອ້ອນວອນຂອງພຣະເຢຊູສຳເຣັດໃນຊີວິດຂອງທ່ານ? ໃຫ້ເວລາຄິດ. ເຊີນບາງຄົນໃຫ້ສະແດງຄວາມຄິດເຫັນສ່ວນຕົວ. ປິດການສຶກສາພຣະທັມດ້ວຍການອ້ອນວອນໃຫ້ຄຳອ້ອນວອນຂອງພຣະເຢຊູໄດ້ສຳເຣັດໃນຊີວິດຂອງແຕ່ລະຄົນ ແລະຂໍໃຫ້ພຣະປະສົງຂອງພຣະເຈົ້າຈົ່ງສຳເຣັດໃນຊີວິດຂອງຜູ້ເຊື່ອທຸກຄົນ.

*ດຣ. ສິດນີ ຄານ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 11
# "ສຳເຣັດແລ້ວ"

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢຮັນ 19:13-30
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ໂຢຮັນ 18--19
**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຢຊູຊົງສຳເຣັດວຽກງານທີ່ພຣະເຈົ້າໄດ້ມອບໃຫ້ພຣະອົງໂດຍການສະລະພຣະຊົນເທິງໄມ້ກາງແຂນ.
**ຄຳຖາມເພື່ອການສຳຣວດ:** ແມ່ນຫຍັງທີ່ "ສຳເຣັດ" ທີ່ໂຄລະໂຄທາ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອອະທິບາຍຄວາມໝາຍຂອງໄມ້ກາງແຂນພຣະເຢຊູ ແລະຕັດສິນໃຈວ່າຂ້ອຍຈະຕອບຮັບພຣະອົງວິທີໃດ?

## ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ປະກາດຂ່າວປະເສີດກັບທຸກຄົນ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ແນະນຳບົດຮຽນໂດຍບອກນັກຮຽນວ່າ ມື້ນີ້ພວກເຮົາຈະເບິ່ງເຣື່ອງນຶ່ງໃນພຣະຄັມພີຊຶ່ງເປັນເຣື່ອງທີ່ຄຣິສຕຽນສ່ວນຫລາຍຄຸ້ນເຄີຍ ແລະອາດຈະເບິ່ງບົດຮຽນນີ້ແບບບໍ່ເອົາໃຈໃສ່ ໂດຍສະເພາະແມ່ນບົດຮຽນໃໝ່ໆສຳລັບຊີວິດພວກເຮົາ. ຊັກຊວນໃຫ້ທຸກຄົນຕັ້ງໃຈເບິ່ງບົດຮຽນມື້ນີ້ ເໝືອນກັບວ່າພວກເຮົາບໍ່ໄດ້ຮູ້ເຣື່ອງນີ້ມາກ່ອນ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ແຕ່ງໃຫ້ຫລາຍຄົນອ່ານພຣະທັມຊ່ວຍກັນ ແຕ່ໂຢຮັນ 18:1 ຈົນຮອດ 19:12 ໂດຍແບ່ງພາກດັ່ງຕໍ່ໄປນີ້: 18:1-11; 18:12-24; 18:33-40; 19:1-12. ໃນຂະນະທີ່ຟັງການອ່ານຢູ່ນັ້ນໃຫ້ສັງເກດເບິ່ງວ່າ ພຣະເຢຊູຊົງຄວບຄຸມສະຖານະການຕລອດເວລາ ເຖິງວ່າເບິ່ງແບບເຜີນໆແລ້ວຮູ້ສຶກວ່າຄົນອື່ນເປັນຜູ້ຄວບຄຸມ.

3. ອ່ານ 18:38 ອີກເທື່ອນຶ່ງໃຫ້ທຸກຄົນໄດ້ຍິນແລະຖາມວ່າ, ຄຳຕອບຂອງປີລາດຕໍ່ພຣະເຢຊູ ມີຄວາມໝາຍແນວໃດ? ຄຳຕອບນີ້ບອກຫຍັງແດ່ກ່ຽວກັບສະພາບທາງຈິດວິນຍານຂອງປີລາດ?

4. ອະທິບາຍປະເພນີເຣື່ອງວັນປັສຄາແລະການປະຕິບັດຂອງຊາດຢິວ. ເບິ່ງບົດຮຽນຫົວຂໍ້ ການລົງໂທດພຣະເຢຊູ (19: 13-16) . ອ່ານ 19:13-16; ຖາມ: ການຕາຍຂອງພຣະເຢຊູມີສ່ວນຄ້າຍຄືກັນແນວໃດກັບຄວາມໝາຍຂອງວັນປັສຄາ?

5. ໃຫ້ຜູ້ນຶ່ງອ່ານ 19:17-27. ອະທິບາຍຈຸດສຳຄັນໃນການຖວາຍຂອງພຣະເຢຊູໂດຍໃຊ້ບົດຮຽນຊ່ວຍ.

6. ໃຫ້ຜູ້ນຶ່ງອ່ານ 19: 28-30. ໃຫ້ທຸກຄົນຟັງເບິ່ງຄຳສຸດທ້າຍທີ່ພຣະເຢຊູຊົງກ່າວກ່ອນສິ້ນພຣະຊົນ. ຫລັງຈາກອ່ານຈົບແລ້ວໃຫ້ຖາມ, ແມ່ນຫຍັງຄືຄຳສຸດທ້າຍຂອງພຣະເຢຊູ? (ສຳເຣັດແລ້ວ) ຖາມ: ທ່ານຄິດວ່າ ພຣະເຢຊູຊົງໝາຍເຖິງຫຍັງໃນຄຳເວົ້ານີ້? ໃຊ້ເວລາສົນທະນາເພື່ອເວົ້າເຖິງການສຳເຣັດພັນທະກິດເຣື່ອງການໄຖ່ມະນຸດຈາກຄວາມຜິດບາບໄດ້ສຳເຣັດແລ້ວ.

## ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)

7. ຊັກຊວນນັກຮຽນໃຫ້ເວົ້າເຖິງຄວາມໝາຍຂອງການຖືກຄຶງທີ່ໄມ້ກາງແຂນສຳລັບພວກເຂົາແຕ່ລະຄົນ ແລະໃຫ້ທຸກຄົນພິຈາຣະນາເບິ່ງຄຳວ່າ "ສຳເຣັດແລ້ວ." ຕອບຄຳຖາມທີ 5 ໃນທ້າຍບົດຮຽນ, ການຖືກຄຶງທີ່ໄມ້ກາງແຂນຂອງພຣະເຢຊູມີຄວາມໝາຍແນວໃດສຳລັບທ່ານ? ຫລັງຈາກລົມກັນແລ້ວໃຫ້ເບິ່ງຄຳຖາມທີ 4, ທ່ານມີໂອກາດທີ່ຈະເປີດເຜີຍຕົວເອງໃນສັງຄົມບໍ່? ຄົນທີ່ຮູ້ກັບທ່ານເຂົາຕື່ນບໍ່? ຖ້າຈະຖາມອີກແບບນຶ່ງກໍແມ່ນ, ຄົນອື່ນໆຮູ້ໄດ້ແນວໃດວ່າທ່ານເປັນຄຣິສຕຽນ? ຖ້າຄຳຕອບແມ່ນ, ຂ້ອຍພຍາຍາມໃຊ້ຊີວິດໃນທາງດີໄດ້ບໍ່? ຊັກຊວນພິຈາຣະນາຄຳຖາມນີ້ ແລະໃຫ້ທຸກຄົນໄດ້ຄິດວ່າຈະຕອບແນວໃດສຳລັບສິ່ງທີ່ພຣະເຢຊູໄດ້ຊົງເຮັດເພື່ອພວກເຮົາທີ່ໄມ້ກາງແຂນ. ອ້ອນວອນປິດການຮຽນໂດຍອ້ອນວອນໃຫ້ພຣະເຈົ້າຊົງເປີດເຜີຍວິທີທີ່ທຸກຄົນຈະໄດ້ເປັນພຍານເຣື່ອງຄວາມຮັກ ແລະພຣະຄຸນຂອງພຣະອົງ ແລະໃຫ້ພວກເຮົາໄດ້ສະແດງຊີວິດທີ່ມີຄວາມໝາຍສຳລັບການຖືກຄຶງທີ່ໄມ້ກາງແຂນຂອງພຣະເຢຊູ.

*ດຣ. ສິດນີ ດານ*

# <u>ບົດແນະນຳຄຣູສອນ</u>
# <u>ບົດຮຽນທີ 12</u>
# <u>ເຮົາສົ່ງທ່ານໄປ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ໂຢຮັນ 20:1-21

**<u>ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:</u>** ໂຢຮັນ 20

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ການຟື້ນພຣະຊົນສະແດງເຖິງຄວາມເປັນພຣະເຈົ້າ ດັ່ງນັ້ນຈຶ່ງຊົງສັ່ງເຮົາທັງຫລາຍອອກໄປບອກຂ່າວດີນີ້.

**<u>ຄຳຖາມເພື່ອການສຳຣວດ:</u>** ພຣະເຢຊູຜູ້ຊົງຟື້ນພຣະຊົນສັ່ງໃຫ້ທ່ານໄປທາງໃດ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຊັກຊວນໃຫ້ພວກເຮົາອອກໄປບ່ອນທີ່ພຣະອົງສັ່ງໃຫ້ໄປ.

**<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.
- ປະກາດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ເຫັນທຸກຄົນເປັນສີພຣະທັດຂອງອົງພຣະຜູ້ເປັນເຈົ້າ.

## <u>ບົດນຳ</u>

ຂອງທີ່ມີຄຸນຄ່າໃນໂລກກໍມີຫລາຍຢ່າງ ແຕ່ສິ່ງທີ່ຄົນເຮົາຊອກຫລາຍກວ່າສິ່ງອື່ນນັ້ນແມ່ນເງິນຄຳ, ເຮົາຍັງບໍ່ເຫັນຜູ້ໃດເວົ້າວ່າມີພໍແລ້ວແມ່ນແຕ່ທ່ານ ບຽວເກດ ເສດຖີຂອງອະເມຣິກາຍັງເວົ້າວ່າມີອີກຈັກໜ່ອຍຄືຈະພໍ.ທ່ານແລະຂ້າພະເຈົ້າຍັງຫ່າງໄກຈາກທ່ານ ບຽວເກດຫລາຍ, ດັ່ງນັ້ນຄືຈະເປັນໄປບໍ່ໄດ້ທີ່ເຮົາຈະເວົ້າວ່າເຮົາມີພໍແລ້ວ. ສິ່ງທີ່ໜ້າຄິດຄືທຸກຢ່າງທີ່ເຮົາຫາມາໄດ້ຈະສູນເສັຽໄປເມື່ອເຮົາຫລັບຕາລາໂລກ. ເມື່ອເປັນເຊັ່ນນັ້ນເຮົາຈຶ່ງຮູ້ໄດ້ວ່າຂອງມີຄ່າທີ່ເຮົາຄວນຊອກສແວງຫານັ້ນຄືຊີວິດ. ສ່ວນບໍ່ເກີດແຫ່ງຊີວິດນັ້ນມີແຕ່ຢູ່ໃນພຣະເຢຊູ ເພາະມີແຕ່ພຣະອົງເທົ່ານັ້ນທີ່ຕາຍແລ້ວຄືນມາອີກ.

## <u>ວິທີສອນ</u>

1. ຄຣູມາຫ້ອງຮຽນກ່ອນເວລາແລະລັອກປະຕູຫ້ອງຮຽນໄວ້ເພື່ອຄົນທີ່ມາຕາມຫລັງຈະໄດ້ເຂາະປະຕູຂໍເຂົ້າຫ້ອງຮຽນ.
    ກ. ຖາມນັກຮຽນ: ເປັນຫຍັງທ່ານຈຶ່ງໄດ້ເປີດປະຕູ ຫລືເຄາະກ່ອນເຂົ້າ?
    ຂ. ຄຣູເລົ່າເຣື່ອງຣິດອຳນາດສອງປະການ.
        1. ຫີນໃຫຍ່ປິດປາກຖ້ຳຖືກເປີດອອກດ້ວຍອຳນາດ, ມາຣີອາບໍ່ໄດ້ເຄາະປະຕູຄືເຮົາເມື່ອກີ້.
        2. ພຣະເຢຊູເຂົ້າໃນຫ້ອງທີ່ສາວົກປະຊຸມກັນບໍ່ມີໃຜເປີດປະຕູ ແຕ່ພຣະເຢຊູເຂົ້າໄດ້.

1. <u>ຂໍໃຫ້ຜູ້ນຶ່ງອ່ານ ຂ0:1-9    ອຸບໂມງຫວ່າງເປົ່າ</u>

ກ. ມາຣີອາໄປອຸບໂມງແຕ່ເຊົ້າມືດ ຍ້ອນຄວາມຮັກອັນໃຫຍ່ພານາງໄປ (ຂໍ້ 1).

ຂ. ຫີນແຜ່ນໃຫຍ່ທີ່ອັດປາກຖໍ້າຖືກເປີດອອກຢ່າງອັສຈັນ.

ຄ. ມາຣີອາເຂົ້າໄປອຸບໂມງ ບໍ່ເຫັນສົບພຣະເຢຊູດ້ວຍຄວາມຕົກໃຈ (ຂໍ້ ຂ).

ງ. ມາຣີອາໄປລາຍງານຕໍ່ສາວົກແລະພວກສາວົກແລ່ນໄປຖໍ້າ (ຂໍ້ 3).

ຈ. ຜ້າພັບໄວ້ຢ່າງເປັນຣະບຽບບົ່ງບອກວ່າ ພຣະເຢຊູຊົງຟື້ນພຣະຊົນແລະພັບຜ້າໄວ້ໂດຍເພິ່ນເອງ (ຂໍ້ 7).

ສ. ສາວົກເຫັນແຕ່ບໍ່ເຂົ້າໃຈເຣື່ອງທີ່ເກີດຂື້ນ (ຂໍ້ 9).

ຂ. <u>ຂໍໃຫ້ຜູ້ນຶ່ງອ່ານ  ຂ0:10-18 ຊົງຟື້ນແລ້ວ</u>

ກ. ສາວົກກັບບ້ານ (ຂໍ້ 10).

ຂ. ມາຣີອາຍັງຢືນໄຫ້ຢູ່ບໍຣິເວນອຸບໂມງ ແລ້ວເທວະດາປາກົດຕໍ່ນາງ (ຂໍ້ 11-13)

ຄ. ພຣະເຢຊູປາກົດແກ່ນາງ ແຕ່ນາງເບິ່ງບໍ່ຄັກຈຶ່ງຄຶດວ່າພຣະເຢຊູແມ່ນຄົນເຝົ້າສວນ (ຂໍ້ 14-15).

ງ. ຊົງສົນທະນາກັບມາຣີອາ (ຂໍ້ 16-18)

3. <u>ຂໍໃຫ້ຜູ້ນຶ່ງອ່ານ  ຂ0:19-ຂ1 ຊົງປາກົດແກ່ສາວົກ</u>

ກ. ຄໍ່າວັນທີດນັ້ນພຣະເຢຊູປາກົດແກ່ພວກສາວົກແບບອັສຈັນ (ຂໍ້ 19ກ).

ຂ. ກ່າວວ່າ *ສັນຕິສຸກຈົ່ງມີແກ່ທ່ານທັງຫລາຍ* ເປັນການທັກທາຍແບບເລົ້າໂລມໃຈ ເພາະວ່າເຂົາບໍ່ມີສັນຕິສຸກ ເນື່ອງຈາກເຫດການທີ່ເກີດຂື້ນ (ຂໍ້ 19ຂ).

ຄ. ຊົງສໍາແດງຮອຍບາດແຜໃຫ້ສາວົກພິສູດ (ຂໍ້ ຂ0).

ງ. ຊົງແຕ່ງຕັ້ງໃຫ້ອອກໄປປະກາດເຣື່ອງການຄືນມາຈາກຕາຍ (ຂໍ້ ຂ1).

ຈ. ຄໍາວ່າ  *ພຣະບິດາໄດ້ຊົງໃຊ້ເຮົາມາຢ່າງໃດ ຝ່າຍເຮົາກໍໃຊ້ທ່ານໄປຢ່າງນັ້ນ* ແປວ່າ ພຣະເຢຊູເຮັດແນວໃດ ພວກສາວົກຕ້ອງເຮັດແນວນັ້ນ.

<u>ຄໍາຖາມ:</u>

1. ການຟື້ນພຣະຊົນຂອງພຣະເຢຊູມີຄວາມໝາຍສໍາຄັນຫຍັງສໍາລັບທ່ານ?

ຂ. ທ່ານເຂົ້າໃຈເຫດຜົນຂອງການຟື້ນພຣະຊົນຢ່າງໃດ?

3. ທ່ານເຂົ້າໃຈວ່າທ່ານເປັນສາວົກຂອງພຣະອົງບໍ່? ຫາກເຂົ້າໃຈດັ່ງນັ້ນ ຈົ່ງລະນຶກວ່າພຣະອົງໃຊ້ທ່ານໄປໃສແດ່?

*ດຣ. ທຸນພັນ ວົງສຸຣິດທ໌*

# ບົດແນະນຳຄູສອນ
# ບົດຮຽນທີ 13
# ຊີວິດເປັນຜູ້ເລືອກ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢຮັນ 21:15-23
**ຂໍ້ພຣະຄັມພີທັງຫມົດສຳລັບບົດຮຽນນີ້:** ໂຢຮັນ 21
**ຈຸດສຳຄັນຂອງບົດຮຽນນີ້:** ເຮົາມີໜ້າທີ່ຮັບຜິດຊອບຮັບໃຊ້ພຣະເຢຊູຄຽງບ່າຄຽງໄລ່ກັນ.
**ຄຳຖາມເພື່ອການສຳຣວດ:** ເປັນຫຍັງຄົນເຮົາຈຶ່ງມັກປຽບທຽບຕົນໃສ່ຜູ້ອື່ນ ແທນທີ່ຈະມີຊີວິດຕົນເອງ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊັກຊວນໃຫ້ພວກເຮົາຕັ້ງໃຈຮັບໃຊ້ຮ່ວມກັນແທນທີ່ຈະປຽບກັບຜູ້ອື່ນ.

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.
- ປະກາດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## ບົດນຳ

ພຣະທັມໂຢຮັນບົດ 21 ແມ່ນພຣະທັມບົດລົງທ້າຍການບັກທຶກເຫດການຕ່າງໆທີ່ສາວົກໂຢຮັນໄດ້ເຫັນກັບຕາ, ໄດ້ຍິນກັບຫູຂອງເພິ່ນໃນຂະນະທີ່ເພິ່ນເປັນສາວົກຕິດຕາມພຣະເຢຊູໃນເວລາສາມປີ, ເພິ່ນໄດ້ບັນທຶກແຕ່ຕອນສຳຄັນດັ່ງທີ່ເຮົາຈະສຶກສາກັນຕໍ່ໄປນີ້.

**ຂໍໃຫ້ຜູ້ນຶ່ງອ່ານ 21: 15-19 ມອບພຣະຣາຊກິດ**

ກ. ຄວາມສຳພັນໃນຣະຫວ່າງພຣະເຢຊູແລະເປໂຕໄດ້ຖືກມ້າງເພຕອນເປໂຕປະຕິເສດພຣະເຢຊູ (ໂຢຮັຍ18:15-17).
ຂ. ເຂົ້າເຈົ້າສາມາດຮູ້ໄດ້ວ່າແມ່ນພຣະເຢຊູເປັນຜູ້ຫ້າງຫາໄວ້ "*ເມື່ອຂຶ້ນຕາຝັ່ງແລ້ວກໍເຫັນຖ່ານຕິດໄຟພ້ອມທັງມີປາແລະເຂົ້າຈີ່ຂາງຢູ່* "(ໂຢຮັນ 21:9).

1. ພຣະເຢຊູຖ່ອມຕົວຄົວກິນຖ້າສາວົກ.
2. ເປັນກຽດອັນຍິ່ງໃຫຍ່ທີ່ໄດ້ຮັປທານອາຫານຈາກຝີມືພຣະເຢຊູ.
3. ເປັນການສະແດງເຖິງການຟື້ນພຣະຊົນມາເປັນຄົນແທ້ໆ, ບໍ່ແມ່ນຜີຄືລາງຄົນຄິດ.

ຄ. ພຣະເຢຊູຖາມເປໂຕສອງຄັ້ງທຳອິດເປັນຄຳຖາມວ່າ <u>ອາກາເປ</u> ແປວ່າຮັກຍິ່ງໃຫຍ່ໃນຣະວ່າງມະນຸດກັບພຣະເຈົ້າ ເປໂຕຕອບທັງສອງຄັ້ງວ່າ <u>ຟີໂລ</u> ພຣະອົງ. ຖືວ່າເປັນຄວາມຮັກທີ່ນ້ອຍໄປກວ່າ<u>ອາກາເປ</u>ແລະເປັນຄວາມຮັກແບບໝູ່ເພື່ອນ, ແບບອ້າຍແບບນ້ອງແລະຄົນທົ່ວໄປ.
ງ. ຄັ້ງທີສາມພຣະເຢຊູຈຶ່ງຖາມເປໂຕຕາມຄວາມຮັກຂອງລາວຄືພຣະເຢຊູຖາມວ່າ " ຟີໂລເຮົາບໍ່ " ຄັ້ງທີສາມເປໂຕ

ຕອບດ້ວຍຄວາມໝັກໃຈ.

ຈ. ທັງສາມຄັ້ງພຣະເຢຊູຊົງມອບໝາຍໜ້າທີ່ໃນຄຳເວົ້າຄ້າຍຄຽງກັນ;

1. *"ຈົ່ງລ້ຽງແກະໜຸ່ມຂອງເຮົາເທີ້"* (ຂໍ້ 15ຄ).
2. *"ຈົ່ງຮັກສາແກະຂອງເຮົາເທີ້"* (ຂໍ້ 16ຂ).
3. *"ຈົ່ງລ້ຽງແກະຂອງເຮົາເທີ້"* (ຂໍ້ 17ຄ).

ສ. ພຣະເຢຊູຖາມເປໂຕເຖິງສາມເທື່ອ ອາດຈະເປັນເພາະວ່າຢາກເນັ້ນໝັກຍ້ອນຢ້ານເປໂຕຈະປະຕິເສດອີກ ດັ່ງທີ່ເຫັນໃນໂຢຮັນບົດ 18.

ຊ. ພຣະເຢຊູທຳນວາຍເຖິງຄວາມທຸກທໍຣະມານຂອງເປໂຕ (ຂໍ້ 18-19).

## <u>ຂໍໃຫ້ຜູ້ນຶ່ງອ່ານ 21:20-23 ຊົງໃຊ້ຕາມນ້ຳພຣະທັຍ</u>

ກ. ເປໂຕຫັນຫລັງມາແລ້ວເຫັນໂຢຮັນຍືນຢູ່ໃກ້ຫັ້ນ ຈຶ່ງຖາມພຣະເຢຊູວ່າ ໂຢຮັນເດຈະເປັນແນວໃດ? (ຂໍ້ 21).

ຂ. ເປໂຕບໍ່ສົມຄວນຖາມເຣື່ອງຂອງຜູ້ອື່ນ, ແລະບໍ່ຄວນຈະປຽບຕົນເອງກັບຜູ້ອື່ນ ດັ່ງນັ້ນພຣະເຢຊູຈຶ່ງຕອບເປໂຕວ່າ *ຖ້າເຮົາມີໃຈຢາກໃຫ້ຜູ້ນີ້ຍືນຢູ່ຈົນເຖິງເຮົາມານັ້ນຈະເປັນທຸຣະອັນໃດກັບເຈົ້າໜໍ* "(ຂໍ້ 22).

1. *ຖ້າເຮົາມີໃຈຢາກໃຫ້ຜູ້ນີ້ຍືນຢູ່ຈົນເຖິງເຮົາມາ* ແປວ່າຖ້າພຣະອົງພໍໃຈເຊັ່ນໃດກໍຈະເປັນເຊັ່ນນັ້ນ ແຕ່ບໍ່ໄດ້ໝາຍຄວາມວ່າຜູ້ນັ້ນຈະບໍ່ຕາຍ.
2. *ຈະເປັນທຸຣະອັນໃດກັບເຈົ້າໜໍ* ແປວ່າບໍ່ແມ່ນໜ້າທີ່ຂອງເຈົ້າຈະຖາມເຣື່ອງຂອງຜູ້ອື່ນ ຫລືຢາກຮູ້ວ່າຜູ້ອື່ນຈະດີຫລືຊົ່ວກວ່າຕົນເອງແນວໃດ?

ຄ. *"ສ່ວນເຈົ້າຈົ່ງຕາມເຮົາມາ"* (ຂໍ້ 22) ແປວ່າພາກສ່ວນຂອງເຈົ້າ ຫລືໜ້າທີ່ຂອງເຈົ້າແມ່ນຕິດຕາມເຮົາມາ.

## <u>ຂໍໃຫ້ຜູ້ນຶ່ງອ່ານ 21:24-25 ເລືອກໃຊ້ໃຫ້ບັນທຶກ</u>

ກ. ໂຢຮັນລົງທ້າຍການບັນທຶກບອກວ່າເພິ່ນເປັນຜູ້ບັນທຶກເຫດການສຳຄັນໂດຍການຮູ້ເຫັນເຫດການທັງໝົດ (ຂໍ້ 24).

ຂ. *"ຖ້າຈະຂຽນໄວ້ຕາມລຳດັບທຸກປະການ ຂ້າພະເຈົ້າຄາດວ່າໝົດທັງໂລກກໍບໍ່ມີບ່ອນພໍໄວ້ໜັງ ສືທີ່ຈະຂຽນນັ້ນ"* ບໍ່ໄດ້ໝາຍຄວາມວ່າໂລກທັງໂລກບໍ່ມີບ່ອນຈະເກັບມ້ຽນ ແຕ່ອາຈໝາຍຄວາມວ່າບໍ່ສາມາດບັນທຶກທຸກນາທີທີ່ຕິດຕາມພຣະເຢຊູ (ຂໍ້ 25).

<u>ຄຳຖາມ:</u>

1. ເປັນຫຍັງພຣະເຢຊູຈຶ່ງຖາມເປໂຕເຖິງສາມເທື່ອ?

2. ທັງສາມເທື່ອນັ້ນພຣະເຢຊູມອບວຽກໃຫ້ເປໂຕຢ່າງໃດ?

3. ພຣະເຢຊູມອບວຽກໃຫ້ເປໂຕນັ້ນມີຄວາມໝາຍຫຍັງຕໍ່ທ່ານ? *ດຣ. ຂຸນພັນ ວົງສຸຣິດທ໌*

# <u>ບົດແນະນຳຄຣູສອນ</u>
# <u>ບົດຮຽນຄຣິສມັສ</u>
# <u>ຫລັງຈາກປະສູດ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ມັດທາຍ 2:1-12
<u>ຂໍ້ພຣະຄັມພີທັງໝົດສຳລັບບົດຮຽນນີ້:</u> ມັດທາຍ 1:18--2:23
<u>ຈຸດສຳຄັນຂອງບົດຮຽນນີ້:</u> ເພື່ອໃຫ້ທຸກຄົນຮູ້ຈັກການເກີດຂອງພຣະກຸມມານ
<u>ຄຳຖາມເພື່ອການສຳຣວດ:</u> ຫລັງຈາກຄຣິສມັສແລ້ວເປັນແນວໃດ?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອບອກເຣື່ອງການເກີດຂອງພຣະເຢຊູໃຫ້ຜູ້ອື່ນຟັງ.

<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.
- ປະກາດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ເຫັນທຸກຄົນເປັນສິພຣະທັດຂອງອົງພຣະຜູ້ເປັນເຈົ້າ.

## <u>ບົດນຳ</u>

1. ຫລັງຈາກຂຽນຄຳວ່າ "ຄຣິສມັສ" ໃສ່ກະດານແລ້ວ ຖາມນັກຮຽນວ່າ ຄຣິສມັສມີຄວາມໝາຍສຳລັບທ່ານແນວໃດ? ໃຫ້ສອງຫລືສາມຄົນອອກຄຳເຫັນໃນເຣື່ອງນີ້.

2. ຖາມນັກຮຽນອີກວ່າ ຄຣິສມັສ ແມ່ນຍາມເຮົາຮັບຂອງຂວັນ ຫລືແມ່ນຍາມເຮົາໃຫ້ຂອງຂວັນ? ໃນທຳນອງດຽວກັນໃຫ້ນັກຮຽນອອກຄຳເຫັນຈັກສອງສາມຄົນ.

3. <u>ຂໍໃຫ້ຜູ້ນຶ່ງອ່ານ ມັດທາຍ 2:1-2 ພາກຕາເວັນອອກ</u>
   ກ. ນີ້ແມ່ນການລົງທະບຽນສຳມະໂນຄົວຄັ້ງທຳອິດ ເພື່ອເກັບພາສີສົ່ງເສີມຈັກກະພັດໂຣມປົກຄອງຢິວ.
   ຂ. ຄຳສັ່ງໃຫ້ທຸກຄົນໄປລົງທະບຽນທີ່ບ້ານເກີດເມືອງນອນຂອງໃຜລາວ.
   ຄ. ໂຢເຊບເປັນຄູ່ໝັ້ນຂອງມາຣີອາຈຳຕ້ອງລົງທະທຽນເປັນຜົວເມັຽກັນ ຕ້ອງເດີນທາງຈາກບ້ານນາຊາເຣັດໄປຍັງເມືອງເບັດເລເຮັມ ແຂວງຢູດາຍ ລະຍະທາງປະມານ 40 ໄມ ຕາມຄຳສັນນະສູດຂອງສາສນາສາດ.
   ງ. ພວກໂຫຣາຈານເປັນນັກວິທະຍາສາດ, ເປັນຄົນເອົາຈິງເອົາຈັງເຣື່ອງຄວາມຝັນ, ເປັນນັກຮຽນຮູ້ເຣື່ອງທີ່ຈະເກີດຂຶ້ນໃນອະນາຄົດ.

ຈ. ເຂົາໄດ້ເຫັນດາວພິເສດຂອງພຣະເຈົ້າປາກົດ, ເຂົາຮູ້ວ່ານີ້ແມ່ນດາວພິເສດຈາກອົງພຣະຜູ້ເປັນເຈົ້າ.

ສ. ເຂົາຕາມຫາພຣະກຸມມານເພື່ອຈະຂາບໄຫວ້ນະມັສການ ແລະຖວາຍສິ່ງຂອງ.

4. <u>ຂໍໃຫ້ຜູ້ນຶ່ງອ່ານ ມັດທາຍ 2:3-8 ກະສັດເຮໂຣດປອງຮ້າຍ</u>

ກ. ເຮໂຣດຫວຸ້ນວາຍໃຈ ດ້ວຍເຂົ້າໃຈວ່າພຣະເຢຊູຈະມາຍາດຕຳແໜ່ງກະສັດ.

ຂ. ການປະຊຸມຄະນະປະໂລຫິດ ແມ່ນເພື່ອສືບຫາຄວາມຈິງຈາກພວກປະໂລຫິດ.

ຄ. ພວກໂຫຮາຈານບອກເຮໂຣດບ່ອນພຣະເຢຊູຊິງປະສູດຢ່າງຄັກແນ່.

ງ. ເຮໂຣດເອີ້ນໂຫຮາຈານເຂົ້າມາໃກ້ເພື່ອຈະເວົ້າເປັນການລັບ.

ຈ. ເຮໂຣດຕົວະໂຫຮາຈານໃຫ້ໄປຄົ້ນຫາ ເມື່ອຮູ້ຄັກແລ້ວໃຫ້ກັບມາບອກເພື່ອເພິ່ນຈະໄດ້ໄປຂາບໄຫວ້.

ສ. ເຮໂຣດຜິດພາດບໍ່ສົ່ງທະຫານໄປພ້ອມກັບໂຫຮາຈານ.

5. <u>ຂໍໃຫ້ຜູ້ນຶ່ງອ່ານ ມັດທາຍ 2:9-12 ໂຫຮາຈານນະມັສການ</u>

ກ. ດາວພິເສດຂອງພຣະເຈົ້ານຳໜ້າໂຫຮາຈານໄປຈົນຮອດບ່ອນພຣະເຢຊູປະສູດ, ເປັນນ້ຳພຣະທັຍພຣະເຈົ້າໃຫ້ໂຫຮາຈານໄປນະມັສການ.

ຂ. ການປາກົດຂອງດາວນີ້ທ່ານມັດທາຍບໍ່ໄດ້ບອກລັກສະນະການປາກົດແລະນຳໜ້າຢ່າງໃດ ແຕ່ບອກແຈ້ງດາວດວງນີ້ມາຢຸດຢູ່ບ່ອນພຣະກຸມມານເຢຊູບັງເກີດ.

ຄ. ໂຫຮາຈານເຂົ້ານະມັສການແລະຖວາຍສິ່ງຂອງມີຣາຄາ

ງ. ຂໍ້ສົມທຽບຣະຫວ່າງ ກະສັດເຮໂຣດແລະໂຫຮາຈານ; ເຮໂຣດຜູ້ບໍ່ເຊື່ອປອງຮ້າຍ, ໂຫຮາຈານຜູ້ຮູ້ເຣື່ອງກັບນະມັສການແລະຖວາຍ.

ຈ. ການຖວາຍຂອງໂຫຮາຈານສະແດງອອກເຖິງຄວາມໂຄຣົບ.

ສ. ພຣະເຈົ້າເຕືອນໂຫຮາຈານທາງຄວາມຝັນບໍ່ໃຫ້ກັບໄປລາຍງານຕໍ່ເຮໂຣດ, ໂຫຮາຈານເລືອກຟັງພຣະເຈົ້າເຕືອນທາງຄວາມຝັນ ເພາະພວກໂຫຮາຈານເປັນຄົນເອົາຈິງເອົາຈັງກັບຄວາມຝັນ.

<u>ຄຳຖາມ:</u>

1. ພຣະເຢຊູເປັນຫຍັງຈຶ່ງບັງເກີດທີ່ບ້ານເມືອງນ້ອຍໆ ແລະຍັງເລືອກເກີດໃນຄອກສັດອີກ?

2. ເປັນຫຍັງພວກໂຫຮາຈານຈຶ່ງຮູ້ເຣື່ອງສຳຄັນນີ້?

3. ເປັນຫຍັງເຮໂຣດຈຶ່ງຫວຸ້ນວາຍໃຈເມື່ອຮູ້ຂ່າວວ່າພຣະເຢຊູຈະປະສູດ?

*ດຣ. ທຸນພັນ ວົງສຸຣິດທ໌*